ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 212 /ລບ
ນະຄອນຫຼວງວຽງຈັນ, ວັນທີ 02 ມິຖຸນາ 2023

# ດຳລັດ
# ວ່າດ້ວຍເຂດປອດພາສີ ແລະ ຮ້ານຄ້າປອດພາສີ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 19 ເມສາ 2016 ແລະ ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງປີ 2016 ສະບັບເລກທີ 80/ສພຊ, ລົງວັນທີ 4 ທັນວາ 2019;
- ອີງຕາມ ໜັງສືສະເໜີຂອງກະຊວງການເງິນ ສະບັບເລກທີ 3085/ກງ, ລົງວັນທີ 04 ຕຸລາ 2022.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການທາງພາສີ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ຄຸ້ມຄອງ ແລະ ຕິດຕາມ ກວດກາເຂດປອດພາສີ ແລະ ຮ້ານຄ້າປອດພາສີ ເພື່ອນຳໃຊ້ທ່າແຮງດ້ານທີ່ຕັ້ງພູມສາດຂອງປະເທດ ໃຫ້ເປັນສູນກາງບໍລິການທາງດ້ານການຄ້າ, ອຸດສາຫະກຳ ແລະ ທາງຜ່ານ, ເຊື່ອມໂຍງ ເຊື່ອມຈອດກັບພາກພື້ນ ແລະ ສາກົນ ຮັບປະກັນສິດຜົນປະໂຫຍດຂອງລັດ, ຜູ້ພັດທະນາ, ຜູ້ລົງທຶນກິດຈະການ ແລະ ຜູ້ດຳເນີນກິດຈະການ ແນໃສ່ດຶງດູດ ແລະ ສົ່ງເສີມການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ຂະຫຍາຍຕົວ ຢ່າງຕໍ່ເນື່ອງ ແລະ ຍືນຍົງ.

### ມາດຕາ 2 ເຂດປອດພາສີ ແລະ ຮ້ານຄ້າປອດພາສີ

ເຂດປອດພາສີ ແມ່ນ ຂອບເຂດ, ບໍລິເວນ ຫຼື ສະຖານທີ່ໃດໜຶ່ງ ທີ່ລັດຖະບານ ກຳນົດເພື່ອລົງທຶນເຂົ້າໃນການຜະລິດ, ປຸງແຕ່ງ, ປະກອບ, ເຕົ້າໂຮມ, ຄັດແຍກ, ຫຸ້ມຫໍ່, ບັນຈຸ, ເກັບຮັກສາ, ແຈກຢາຍສິນຄ້າ ແລະ ບໍລິການທາງຜ່ານ ເພື່ອສະໜອງສິນຄ້າ ແລະ ການບໍລິການເຂົ້າ-ອອກ ສູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ. ສຳລັບສິນຄ້າ, ເຄື່ອງຂອງ ລວມທັງວັດຖຸດິບໃນເຂດດັ່ງກ່າວ ຈະໄດ້ຮັບການງົດເກັບພາສີ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

ຮ້ານຄ້າປອດພາສີ ແມ່ນ ຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວດຳເນີນກິດຈະການ ໃນຮູບແບບຫ້າງຮ້ານ ແລະ ໃຫ້ການບໍລິການ ຂາຍສິນຄ້າຟຸມເຟືອຍ ຫຼື ສິນຄ້າຊັ້ນສູງ ເປັນຕົ້ນ ເຄື່ອງດື່ມທີ່ມີທາດເຫຼົ້າ, ຢາສູບ, ນ້ຳຫອມ, ເຄື່ອງສຳອາງ ລວມທັງຜະລິດຕະພັນພາຍໃນປະເທດ ທີ່ມີຄຸນຄ່າ ແລະ ເອກະລັກສະເພາະ ໃຫ້ແກ່ຜູ້ໂດຍສານ, ນັກທ່ອງທ່ຽວຕ່າງປະເທດ ເດີນທາງເຂົ້າ-ອອກ ສປປ ລາວ ແລະ ນັກການທູດ ທີ່ປະຈຳການ ຢູ່ ສປປ ລາວ. ສຳລັບສິນຄ້າ, ເຄື່ອງຂອງ ຢູ່ໃນຮ້ານຄ້າປອດພາສີ ຈະໄດ້ຮັບການງົດເກັບພາສີ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ການງົດເກັບພາສີ ແລະ ພັນທະອື່ນ** ໝາຍເຖິງ ການບໍ່ໃຫ້ຈ່າຍ ຫຼື ໂຈະໄວ້ຊົ່ວຄາວ ຄ່າພາສີ ແລະ ພັນທະອື່ນ ສຳລັບສິນຄ້າທີ່ໄດ້ຮັບອະນຸຍາດ ໃຫ້ນຳເຂົ້າ-ສົ່ງອອກເປັນການຊົ່ວຄາວ ຢູ່ໃນໄລຍະເວລາໃດໜຶ່ງ ພາຍໃຕ້ເງື່ອນໄຂທີ່ສິນຄ້າເຫຼົ່ານັ້ນ ຕ້ອງໄດ້ຖືກນຳເຂົ້າ-ສົ່ງອອກຄືນ ຫຼື ປະຕິບັດລະບຽບການໃນແຕ່ລະລະບອບພາສີ;

2. **ການຄວບຄຸມທາງພາສີ** ໝາຍເຖິງ ການນຳໃຊ້ມາດຕະການ, ວິທີການ ໃນການອຳນວຍຄວບຄຸມ ກ່ຽວກັບການນຳເຂົ້າ-ສົ່ງອອກ, ເກັບຮັກສາ ແລະ ເຄື່ອນຍ້າຍສິນຄ້າ ໃນເຂດປອດພາສີ ແລະ ຮ້ານຄ້າປອດພາສີ ຕາມລະບຽບການ;

3. **ນະໂຍບາຍ ຫຼື ສິດຜົນປະໂຫຍດ** ໝາຍເຖິງ ຜົນປະໂຫຍດຂອງຜູ້ພັດທະນາ, ຜູ້ລົງທຶນກິດຈະການ ແລະ ຜູ້ດຳເນີນກິດຈະການ ທີ່ໄດ້ຮັບການອຳນວຍຄວາມສະດວກທາງດ້ານພາສີ ແລະ ການຄ້າ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ;

4. **ຜູ້ພັດທະນາ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນ ໃຫ້ພັດທະນາເຂດປອດພາສີ ຕາມກົດໝາຍ ແລະ ດຳລັດສະບັບນີ້;

5. **ຜູ້ລົງທຶນກິດຈະການ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນກິດຈະການໃດໜຶ່ງ ຢູ່ໃນເຂດປອດພາສີ ຫຼື ເຂດອື່ນ ຕາມກົດໝາຍ ແລະ ດຳລັດສະບັບນີ້;

6. **ຜູ້ດຳເນີນກິດຈະການ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການຮ້ານຄ້າປອດພາສີ ຕາມກົດໝາຍ ແລະ ດຳລັດສະບັບນີ້;

7. **ການນຳເຂົ້າ** ໝາຍເຖິງ ການນຳເອົາສິນຄ້າຈາກຕ່າງປະເທດ ເຂົ້າມາ ສປປ ລາວ ລວມທັງການນຳເຂົ້າສິນຄ້າຈາກເຂດເສດຖະກິດພິເສດ;

8. **ຄ່າພັນທະອື່ນ** ໝາຍເຖິງ ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້, ອາກອນລາຍໄດ້, ອາກອນກຳໄລ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;

9. **ຕົວເມືອງອັດສະລິຍະ (Smart City)** ໝາຍເຖິງ ພື້ນທີ່ຂອງຕົວເມືອງ ທີ່ລັດຖະບານ ກຳນົດໃຫ້ເປັນເມືອງຕົວແບບ ຊຶ່ງສະແດງເຖິງຄວາມໝັ້ນຄົງ, ຮຸ່ງເຮືອງ, ຍືນຍົງ ແລະ ເປັນໜ້າຢູ່;

10. **ສະຖານທີ່ເກັບຮັກສາສິນຄ້າ** ໝາຍເຖິງ ສະຖານທີ່ໃນຮົ່ມ ຫຼື ກາງແຈ້ງ ທີ່ນຳໃຊ້ເປັນບ່ອນເກັບຮັກສາສິນຄ້າ, ວັດຖຸປະກອນ, ຊິ້ນສ່ວນປະກອບຂອງຕົນສະເພາະ ໂດຍບໍ່ໄດ້ໃຫ້ການບໍລິການຮັບຝາກສາງໃນຮູບແບບທົ່ວໄປ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ**

ລັດ ຊຸກຍູ້, ສົ່ງເສີມ ໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂດປອດພາສີ ແລະ ຮ້ານຄ້າປອດພາສີ ໂດຍການໃຫ້ນະໂຍບາຍ ຫຼື ສິດຜົນປະໂຫຍດ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ລັດ ສ້າງເງື່ອນໄຂ ແລະ ສິ່ງອໍານວຍຄວາມສະດວກ ໃຫ້ຜູ້ພັດທະນາ, ຜູ້ລົງທຶນກິດຈະການ ແລະ ຜູ້ດໍາເນີນກິດຈະການ ສາມາດເຂົ້າເຖິງແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງ ໃນການພັດທະນາເຂດປອດພາສີ ແລະ ຮ້ານຄ້າປອດພາສີ ໃຫ້ສາມາດດໍາເນີນກິດຈະການ ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ພັດທະນາ, ຜູ້ລົງທຶນກິດຈະການ ແລະ ຜູ້ດໍາເນີນກິດຈະການ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ**

ການເຄື່ອນໄຫວວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ຍຸດທະສາດການພັດທະນາ ບໍລິການເປັນທາງຜ່ານ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ;
3. ຮັບປະກັນການບໍລິການ ໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ, ທັນສະໄໝ, ໂປ່ງໃສ, ສາມາດກວດສອບໄດ້ ແລະ ໄດ້ມາດຕະຖານສາກົນ;
4. ເປີດກວ້າງການແຂ່ງຂັນ ທີ່ສອດຄ່ອງກັບກົດໝາຍ ແລະ ເຊື່ອມໂຍງ ເຊື່ອມຈອດ ກັບພາກພື້ນ ແລະ ສາກົນ, ມີການພັດທະນາແບບຍືນຍົງ;
5. ຮັບປະກັນການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ ໃນການຄຸ້ມຄອງເຂດປອດພາສີ ແລະ ຮ້ານຄ້າປອດພາສີ.

**ມາດຕາ 6 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບ ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ, ເຄື່ອນໄຫວ, ພັດທະນາ ແລະ ຄຸ້ມຄອງເຂດປອດພາສີ ແລະ ຮ້ານຄ້າປອດພາສີ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ປະສົບການ ກ່ຽວກັບການພັດທະນາ ແລະ ຄຸ້ມຄອງເຂດປອດພາສີ ແລະ ຮ້ານຄ້າປອດພາສີ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

# ພາກທີ II
# ເຂດປອດພາສີ
## ໝວດທີ 1
## ຈຸດທີ່ຕັ້ງ, ມາດຕະຖານ ແລະ ເງື່ອນໄຂຂອງເຂດປອດພາສີ

### ມາດຕາ 8 ຈຸດທີ່ຕັ້ງຂອງເຂດປອດພາສີ

ກະຊວງການເງິນ ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ກໍານົດຈຸດທີ່ຕັ້ງຂອງເຂດປອດພາສີ ຊຶ່ງຫ່າງຈາກແຕ່ລະຈຸດເປົ້າໝາຍ ບໍ່ເກີນ ສາມສິບ ກິໂລແມັດ ເພື່ອສະເໜີລັດຖະບານ ພິຈາລະນາ, ຍົກເວັ້ນຈຸດທີ່ຕັ້ງຂອງເຂດປອດພາສີ ໃນເຂດເສດຖະກິດພິເສດ, ເຂດເສດຖະກິດອື່ນ, ເຂດໂລຊິດສະຕິກ ຫຼື ຕົວເມືອງອັດສະຣິຍະ.

ເປົ້າໝາຍສ້າງຕັ້ງເຂດປອດພາສີ ມີ ດັ່ງນີ້:

1. ດ່ານສາກົນຂົວມິດຕະພາບ I ນະຄອນຫຼວງວຽງຈັນ;
2. ດ່ານສາກົນຂົວມິດຕະພາບ II ແຂວງ ສະຫວັນນະເຂດ;
3. ດ່ານສາກົນຂົວມິດຕະພາບ III ແຂວງ ຄໍາມ່ວນ;
4. ດ່ານສາກົນຂົວມິດຕະພາບ IV ແຂວງ ບໍ່ແກ້ວ;
5. ດ່ານສາກົນບໍ່ເຕັນ ແຂວງ ຫຼວງນໍ້າທາ;
6. ດ່ານສາກົນສະໜາມບິນຫຼວງພະບາງ ແຂວງ ຫຼວງພະບາງ;
7. ດ່ານສາກົນນໍ້າພາວ ແຂວງ ບໍລິຄໍາໄຊ;
8. ດ່ານສາກົນແດນສະຫວັນ ແຂວງ ສະຫວັນນະເຂດ;
9. ດ່ານສາກົນວັງເຕົ່າ ແຂວງ ຈໍາປາສັກ;
10. ດ່ານສາກົນໜອງນົກຂຽນ ແຂວງ ຈໍາປາສັກ.

ນອກຈາກ ສິບຈຸດ ເປົ້າໝາຍນີ້ແລ້ວ ຖ້າມີຄວາມຈໍາເປັນ ຕ້ອງໄດ້ສ້າງຕັ້ງ ເພີ່ມເຕີມ ຫຼື ຫຼຸດ ຈໍານວນເຂດປອດພາສີ ທີ່ບໍ່ມີປະສິດທິຜົນນັ້ນ ໃຫ້ກະຊວງການເງິນ ຄົ້ນຄວ້າ ແລະ ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອສະເໜີລັດຖະບານ ພິຈາລະນາ ໃນແຕ່ລະໄລຍະ.

### ມາດຕາ 9 ມາດຕະຖານ ແລະ ເງື່ອນໄຂຂອງເຂດປອດພາສີ

ເຂດປອດພາສີ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີເນື້ອທີ່ດິນ ແຕ່ ສາມເຮັກຕາ ຂຶ້ນໄປ;
2. ມີການນໍາໃຊ້ລະບົບເຂົ້າ-ອອກຈຸດດຽວ (E-Gate) ແລະ ມີກໍາແພງ ຫຼື ຮົ້ວອ້ອມ ທີ່ໄດ້ມາດຕະຖານ;
3. ມີລະບົບຮັກສາຄວາມປອດໄພ, ລະບົບປ້ອງກັນອັກຄີໄພ ແລະ ຕິດຕັ້ງກ້ອງວົງຈອນປິດ (CCTV);
4. ມີເຄື່ອງສາຍແສງ (Scanner) ຫຼື ມີການນໍາໃຊ້ເຄື່ອງສາຍແສງ ເຂົ້າໃນການກວດກາສິນຄ້າເຂົ້າ-ອອກເຂດປອດພາສີ;
5. ມີລະບົບບັນຊີໄດ້ມາດຕະຖານ ໂດຍການຮັບຮອງຈາກຂະແໜງການການເງິນ ແລະ ສາມາດເຊື່ອມຕໍ່ກັບລະບົບບັນຊີຂອງລັດຖະການພາສີ ແລະ ມີລະບົບບັນຊີແບບອອນລາຍ (Online Accounting);

6. ມີລະບົບການຊຳລະຜ່ານທະນາຄານ (E-Banking);

7. ມີລະບົບແຈ້ງພາສີແບບເອເລັກໂຕຣນິກ (Automated System for Customs Data);

8. ມີຫ້ອງການສຳລັບເຈົ້າໜ້າທີ່ພາສີ;

9. ມີລະບົບຄຸ້ມຄອງການຄ່ຽນຖ່າຍ, ບັນຈຸ, ຄວບຄຸມ ແລະ ເຄື່ອນຍ້າຍສິນຄ້າ ດ້ວຍລະບົບເອເລັກໂຕຣນິກ (T 1);

10. ມີໂຄງລ່າງພື້ນຖານທາງດ້ານຂ່າວສານເຕັກໂນໂລຊີ (Information Technology Infrastructure);

11. ມີລະບົບຄຸ້ມຄອງພະນັກງານ (Staff Management System);

12. ມີລະບົບຄຸ້ມຄອງບໍລິຫານແບບອັດໂຕໂນມັດ (Administrative Automated System);

13. ມີລະບົບຄຸ້ມຄອງຄັງສິນຄ້າ (Warehouse Management System);

14. ມີລະບົບຄຸ້ມຄອງການແຈກຢາຍສິນຄ້າ (Distribution Management System);

15. ມີສິ່ງອຳນວຍຄວາມສະດວກອື່ນ ທີ່ຈຳເປັນ.

## ໝວດທີ 2
## ການພັດທະນາເຂດປອດພາສີ

### ມາດຕາ 10 ຮູບການລົງທຶນພັດທະນາເຂດປອດພາສີ

ການລົງທຶນພັດທະນາເຂດປອດພາສີ ມີ ສາມ ຮູບການ ດັ່ງນີ້:

1. ລັດລົງທຶນ ຮ້ອຍສ່ວນຮ້ອຍ;
2. ລັດຮ່ວມທຶນກັບເອກະຊົນ ພາຍໃນ ຫຼື ຕ່າງປະເທດ;
3. ເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ.

### ມາດຕາ 11 ການຂໍອະນຸຍາດພັດທະນາເຂດປອດພາສີ

ນິຕິບຸກຄົນ ທີ່ມີຈຸດປະສົງ ພັດທະນາເຂດປອດພາສີ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດພັດທະນາ ພ້ອມດ້ວຍເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ, ກະຊວງແຜນການ ແລະ ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

### ມາດຕາ 12 ເງື່ອນໄຂຂອງຜູ້ພັດທະນາເຂດປອດພາສີ

ຜູ້ພັດທະນາເຂດປອດພາສີ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;

2. ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນ ທີ່ໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ;

3. ມີທຶນຈົດທະບຽນ ຢ່າງໜ້ອຍ ຫ້າສິບຕື້ກີບ;

4. ມີບຸກຄະລາກອນທີ່ມີປະສົບການ ກ່ຽວກັບເຂດປອດພາສີ;

5. ບໍ່ເຄີຍຖືກສານຕັດສິນລົງໂທດ ຍ້ອນການກະທຳຜິດທາງພາສີ ຫຼື ການກະທຳຜິດທາງດ້ານເສດຖະກິດ ໂດຍເຈດຕະນາ.

ໃນກໍລະນີມີການລົງທຶນຮ່ວມຂອງຕ່າງປະເທດ ການຖືຮຸ້ນຂອງຕ່າງປະເທດນັ້ນ ບໍ່ເກີນ ສີ່ສິບເກົ້າສ່ວນຮ້ອຍ.

**ມາດຕາ 13 ເອກະສານປະກອບຂໍອະນຸຍາດພັດທະນາເຂດປອດພາສີ**

ເອກະສານປະກອບຂໍອະນຸຍາດພັດທະນາເຂດປອດພາສີ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດພັດທະນາເຂດປອດພາສີ;
2. ໃບຢັ້ງຢືນຖານະການເງິນ ທີ່ໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ຫຼື ເອກະສານລາຍງານການເງິນ ທີ່ໄດ້ຜ່ານການກວດສອບອິດສະລະ;
3. ປະຫວັດ ແລະ ປະສົບການຂອງຜູ້ພັດທະນາ;
4. ໃບທະບຽນວິສາຫະກິດ;
5. ສັນຍາຮ່ວມທຸລະກິດ ຖ້າມີ;
6. ມະຕິກອງປະຊຸມຂາຮຸ້ນ ຫຼື ຜູ້ຖືຮຸ້ນ ເຫັນດີໃຫ້ພັດທະນາເຂດປອດພາສີ ຍົກເວັ້ນບໍລິສັດຈຳກັດຜູ້ດຽວ;
7. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ.

**ມາດຕາ 14 ຂັ້ນຕອນການອະນຸຍາດພັດທະນາເຂດປອດພາສີ**

ການອະນຸຍາດພັດທະນາເຂດປອດພາສີ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າ ໂດຍປະສານສົມທົບກັບກະຊວງການເງິນ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລ້ວສະເໜີລັດຖະບານ ເພື່ອພິຈາລະນາອະນຸມັດລົງນາມບົດບັນທຶກຄວາມເຂົ້າໃຈ ສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາເຂດປອດພາສີ;
2. ຜູ້ພັດທະນາເຂດປອດພາສີ ດຳເນີນການສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາເຂດປອດພາສີ ໂດຍສອດຄ່ອງກັບການກຳນົດຂອງກະຊວງການເງິນ ໃຫ້ສຳເລັດ ພາຍໃນກຳນົດເວລາ ສິບສອງເດືອນ ນັບແຕ່ວັນລົງນາມບົດບັນທຶກຄວາມເຂົ້າໃຈ ເປັນຕົ້ນໄປ;
3. ຜູ້ພັດທະນາເຂດປອດພາສີ ດຳເນີນການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລ້ວສະເໜີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຮອງ ຕາມກົດໝາຍ;
4. ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຮັບຮອງເອົາ ບົດລາຍງານການສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາເຂດປອດພາສີ ແລ້ວລາຍງານຕໍ່ລັດຖະບານ ພິຈາລະນາອະນຸມັດ ລົງນາມສັນຍາສຳປະທານ;
5. ຜູ້ພັດທະນາເຂດປອດພາສີ ຕ້ອງສ້າງຕັ້ງບໍລິສັດໂຄງການ ແລະ ຂໍອະນຸຍາດດຳເນີນທຸລະກິດ ຕາມກົດໝາຍທີ່ກ່ຽວຂ້ອງ.

ການພິຈາລະນາແຕ່ລະຂັ້ນຕອນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 15 ສິດຂອງຜູ້ພັດທະນາເຂດປອດພາສີ**

ຜູ້ພັດທະນາເຂດປອດພາສີ ມີ ສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍ ຫຼື ສິດຜົນປະໂຫຍດ ຕາມກົດໝາຍ, ດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນພັດທະນາເຂດປອດພາສີ;

3. ຄັດເລືອກ ແລະ ເຮັດສັນຍາດຳເນີນທຸລະກິດ ກັບຜູ້ລົງທຶນກິດຈະການ;

4. ໄດ້ຮັບຜົນປະໂຫຍດຈາກການໃຫ້ເຊົ່າ, ນຳໃຊ້ທີ່ດິນ ຕາມອາຍຸສັນຍາສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ເປັນເຈົ້າກຳມະສິດຕໍ່ຊັບສິນ ທີ່ຕົນໄດ້ພັດທະນາຢູ່ໃນເຂດປອດພາສີ ເປັນຕົ້ນ ອາຄານ, ສິ່ງປຸກສ້າງ, ພາຫະນະກົນຈັກ ແລະ ຊັບຄົງທີ່ອື່ນ;

6. ລົງທຶນກິດຈະການໃດໜຶ່ງ ໃນເຂດພັດທະນາຂອງຕົນ ແຕ່ຕ້ອງສ້າງເປັນນິຕິບຸກຄົນໃໝ່;

7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 16 ພັນທະຂອງຜູ້ພັດທະນາເຂດປອດພາສີ**

ຜູ້ພັດທະນາເຂດປອດພາສີ ມີ ພັນທະ ດັ່ງນີ້:

1. ປະຕິບັດຕາມ ສັນຍາສຳປະທານ, ບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

2. ເສຍພາສີ ແລະ ພັນທະອື່ນ, ຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ ຢ່າງຄົບຖ້ວນ ຕາມກົດໝາຍ, ລະບຽບການ ແລະ ສັນຍາສຳປະທານ;

3. ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ໃນກໍລະນີຈຳເປັນ ກໍສາມາດນຳໃຊ້ລະບົບບັນຊີສາກົນແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນ;

4. ນຳໃຊ້, ພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ເຕັກໂນໂລຊີ ໃຫ້ແກ່ຜູ້ອອກແຮງງານລາວ ໂດຍສະເພາະເພດຍິງ ແລະ ຊົນເຜົ່າ;

5. ສະຫຼຸບ ແລະ ລາຍງານການດຳເນີນທຸລະກິດຂອງຕົນ ໃຫ້ລັດຖະການພາສີ ຢ່າງເປັນປົກກະຕິ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 17 ຄວາມຮັບຜິດຊອບຂອງຜູ້ພັດທະນາເຂດປອດພາສີ**

ຜູ້ພັດທະນາເຂດປອດພາສີ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ປົກປັກຮັກສາອາຄານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ແລະ ເກັບຮັກສາຂໍ້ມູນໄວ້ໃນລະບົບເອເລັກໂຕຣນິກ ໃຫ້ຢູ່ໃນສະພາບທີ່ພ້ອມໃຊ້ງານ ພ້ອມທັງໃຫ້ເຈົ້າໜ້າທີ່ພາສີ ສາມາດກວດກາໄດ້ທຸກເວລາ ລວມທັງການແກ້ໄຂ, ປັບປຸງ ແລະ ພັດທະນາລະບົບ ຕາມການແນະນຳຂອງລັດຖະການພາສີ;

2. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ພາສີ ໃນການປະຕິບັດວຽກງານວິຊາສະເພາະຂອງຕົນ ເປັນຕົ້ນ ການກວດກາເອກະສານ, ກວດກາສິນຄ້າ ແລະ ລະບົບເອເລັກໂຕຣນິກ;

3. ແຈ້ງໃຫ້ລັດຖະການພາສີ ກ່ຽວກັບການປ່ຽນແປງເນື້ອໃນໃດໜຶ່ງ ທີ່ກ່ຽວຂ້ອງກັບກົດລະບຽບ ແລະ ເງື່ອນໄຂຂອງການລົງທຶນກິດຈະການໃນເຂດປອດພາສີ ເປັນຕົ້ນ ການລວມກິດຈະການ ຫຼື ການປ່ຽນແປງຖານະພາບຂອງນິຕິບຸກຄົນ;

4. ສະເໜີລັດຖະການພາສີ ພິຈາລະນາ ກ່ຽວກັບການອອກລະບຽບການ ໃນການຄຸ້ມຄອງການເຄື່ອນໄຫວ ພາຍໃນເຂດປອດພາສີ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ການລົງທຶນກິດຈະການໃນເຂດປອດພາສີ

### ມາດຕາ 18 ປະເພດການລົງທຶນກິດຈະການ

ປະເພດການລົງທຶນກິດຈະການໃນເຂດປອດພາສີ ມີ ດັ່ງນີ້:

1. ການຜະລິດ, ປຸງແຕ່ງ ຫຼື ປະກອບ;
2. ການຄ້າ ແລະ ການບໍລິການ ເຊັ່ນ ການເຕົ້າໂຮມ, ຄັດແຍກ, ຫຸ້ມຫໍ່, ບັນຈຸ, ເກັບຮັກສາ, ແຈກຢາຍສິນຄ້າ ແລະ ບໍລິການທາງຜ່ານ;
3. ກິດຈະການອື່ນ.

### ມາດຕາ 19 ການຂໍອະນຸຍາດລົງທຶນກິດຈະການໃນເຂດປອດພາສີ

ນິຕິບຸກຄົນ ທີ່ມີຈຸດປະສົງ ລົງທຶນກິດຈະການໃນເຂດປອດພາສີ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດດຳເນີນກິດຈະການ ພ້ອມດ້ວຍເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງດຳລັດສະບັບນີ້ ຕໍ່ກະຊວງການເງິນ ເພື່ອຄົ້ນຄວ້າ ພິຈາລະນາອະນຸມັດ ຕາມກົດໝາຍ ແລະ ລະບຽບການ.

ການລົງທຶນກິດຈະການເຂດປອດພາສີ ຍັງສາມາດດຳເນີນ ໃນເຂດເສດຖະກິດພິເສດ, ເຂດເສດຖະກິດອື່ນ, ເຂດໂລຊິດສະຕິກ ຫຼື ຕົວເມືອງອັດສະຣິຍະ ໂດຍໃຫ້ຍື່ນຄຳຮ້ອງຂໍອະນຸຍາດ ຕໍ່ຄະນະຄຸ້ມຄອງເຂດດັ່ງກ່າວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ພາຍຫຼັງໄດ້ຮັບອະນຸຍາດແລ້ວ ຜູ້ໄດ້ຮັບອະນຸຍາດຕ້ອງລົງທະບຽນ ໃນລະບົບເອເລັກໂຕຣນິກ ນຳກະຊວງການເງິນ.

### ມາດຕາ 20 ເງື່ອນໄຂຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ

ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;
2. ມີສັນຍາດຳເນີນທຸລະກິດກັບຜູ້ພັດທະນາເຂດປອດພາສີ;
3. ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ;
4. ມີບຸກຄະລາກອນ ທີ່ມີຄວາມຮູ້ ແລະ ປະສົບການ ກ່ຽວກັບກິດຈະການທີ່ຈະດຳເນີນທຸລະກິດ;
5. ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນພຽງພໍ ທີ່ເໝາະສົມກັບປະເພດ ແລະ ຂະໜາດກິດຈະການ;
6. ບໍ່ເຄີຍຖືກສານຕັດສິນລົງໂທດ ຍ້ອນການກະທຳຜິດທາງພາສີ ຫຼື ການກະທຳຜິດທາງດ້ານເສດຖະກິດ ໂດຍເຈດຕະນາ;
7. ເປັນວິສາຫະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ.

ໃນກໍລະນີມີການລົງທຶນຮ່ວມຂອງຕ່າງປະເທດ ການຖືຮຸ້ນຂອງຕ່າງປະເທດນັ້ນ ບໍ່ເກີນ ສີ່ສິບເກົ້າສ່ວນຮ້ອຍ.

**ມາດຕາ 21 ເອກະສານປະກອບຂໍອະນຸຍາດລົງທຶນກິດຈະການໃນເຂດປອດພາສີ**

ເອກະສານປະກອບຂໍອະນຸຍາດລົງທຶນກິດຈະການໃນເຂດປອດພາສີ ມີ ດັ່ງນີ້:

1. ຄໍາຮ້ອງຂໍອະນຸຍາດລົງທຶນ;
2. ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດໍາເນີນທຸລະກິດ;
3. ສັນຍາດໍາເນີນທຸລະກິດກັບຜູ້ພັດທະນາເຂດປອດພາສີ;
4. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດໍາເນີນທຸລະກິດ;
5. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
6. ກົດລະບຽບພາຍໃນວິສາຫະກິດ;
7. ເອກະສານຢັ້ງຢືນຖານະທາງດ້ານການເງິນຈາກທະນາຄານ ຫຼື ສະຖາບັນການເງິນອື່ນ;
8. ໃບຢັ້ງຢືນການຖືບັນຊີຈາກຂະແໜງການການເງິນ.

**ມາດຕາ 22 ການພິຈາລະນາການຂໍອະນຸຍາດລົງທຶນກິດຈະການໃນເຂດປອດພາສີ**

ກະຊວງການເງິນ ເປັນຜູ້ຄົ້ນຄວ້າ ໂດຍປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ພິຈາລະນາອະນຸຍາດ ລົງທຶນກິດຈະການໃນເຂດປອດພາສີ ພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີປະຕິເສດການຂໍອະນຸຍາດລົງທຶນກິດຈະການ ກໍໃຫ້ແຈ້ງຜູ້ຮ້ອງຂໍ ພ້ອມດ້ວຍເຫດຜົນ ຢ່າງເປັນລາຍລັກອັກສອນ ພາຍໃນກໍານົດເວລາດັ່ງກ່າວ.

**ມາດຕາ 23 ລະບົບການລົງທະບຽນການລົງທຶນກິດຈະການປອດພາສີ**

ລະບົບການລົງທະບຽນການລົງທຶນກິດຈະການປອດພາສີ ແມ່ນ ລະບົບການຄຸ້ມຄອງ ຜ່ານລະບົບເອເລັກໂຕຣນິກຂອງລັດຖະການພາສີ ໂດຍສອດຄ່ອງກັບຂໍ້ມູນປະເພດກິດຈະການ ຕາມມາດຕະຖານສາກົນ ຊຶ່ງໄດ້ລະບຸເລກທະບຽນ ຜູ້ໄດ້ຮັບນະໂຍບາຍ ຫຼື ສິດຜົນປະໂຫຍດທາງດ້ານພາສີ ຕາມເລກລະຫັດແຕ່ລະປະເພດ ທີ່ໄດ້ຮັບອະນຸຍາດ ຜ່ານລະບົບເອເລັກໂຕຣນິກ ຊຶ່ງມີ ການຜະລິດ, ການຄ້າ, ການບໍລິການ ແລະ ກິດຈະການອື່ນ.

ກະຊວງການເງິນ ລົງທະບຽນຜູ້ລົງທຶນກິດຈະການ ທີ່ໄດ້ຮັບອະນຸຍາດເຂົ້າໃນລະບົບການລົງທະບຽນການລົງທຶນກິດຈະການປອດພາສີ.

**ມາດຕາ 24 ສິດຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ**

ຜູ້ລົງທຶນກິດຈະການໃນເຂດປອດພາສີ ມີ ສິດ ດັ່ງນີ້:

1. ໄດ້ຮັບການສົ່ງເສີມ ແລະ ອໍານວຍຄວາມສະດວກຈາກລັດ ແລະ ຜູ້ພັດທະນາເຂດປອດພາສີ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຈາກການລົງທຶນກິດຈະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ນໍາໃຊ້ທີ່ດິນ, ອາຄານ, ສິ່ງປຸກສ້າງ ແລະ ຊັບສິນບັດຄົງທີ່ອື່ນ ຕາມສັນຍາເຊົ່າກັບຜູ້ພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ເປັນເຈົ້າກໍາມະສິດຕໍ່ຊັບສິນ ໃນການລົງທຶນກິດຈະການຂອງຕົນ;

5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 25 ພັນທະຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ**

ຜູ້ລົງທຶນກິດຈະການໃນເຂດປອດພາສີ ມີ ພັນທະ ດັ່ງນີ້:

1. ດໍາເນີນກິດຈະການ ຕາມການອະນຸຍາດ, ປະຕິບັດຕາມສັນຍາກັບຜູ້ພັດທະນາ, ບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

2. ເສຍພາສີ ແລະ ພັນທະອື່ນ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ຕາມກົດໝາຍ, ລະບຽບການ ແລະ ສັນຍາ;

3. ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ໃນກໍລະນີຈໍາເປັນ ກໍສາມາດນໍາໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນ;

4. ເຊື່ອມຕໍ່ລະບົບຄຸ້ມຄອງສິນຄ້າເຂົ້າ-ອອກສາງ ກັບລະບົບເອເລັກໂຕຣນິກຂອງລັດຖະການພາສີ;

5. ນໍາໃຊ້, ພັດທະນາ ສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ເຕັກໂນໂລຊີ ໃຫ້ແກ່ຜູ້ອອກແຮງງານລາວ;

6. ສະຫຼຸບ ແລະ ລາຍງານ ການດໍາເນີນກິດຈະການຂອງຕົນ ໃຫ້ລັດຖະການພາສີ ຢ່າງເປັນປົກກະຕິ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 26 ຄວາມຮັບຜິດຊອບຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ**

ຜູ້ລົງທຶນກິດຈະການໃນເຂດປອດພາສີ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ປົກປັກຮັກສາອາຄານສະຖານທີ່, ອຸປະກອນຕ່າງໆທີ່ມີ ແລະ ຕ້ອງເກັບຮັກສາຂໍ້ມູນໄວ້ໃນລະບົບເອເລັກໂຕຣນິກ ໃຫ້ຮັບປະກັນຄວາມປອດໄພ ແລະ ສາມາດກວດກາໄດ້ທຸກເວລາ ລວມທັງການພັດທະນາລະບົບດັ່ງກ່າວ ຕາມການກໍານົດຂອງກະຊວງການເງິນ;

2. ຄ່າໃຊ້ຈ່າຍຕ່າງໆ ແລະ ອໍານວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ພາສີ ໃນການປະຕິບັດໜ້າທີ່ນອກໂມງລັດຖະການ;

3. ຄວາມເສຍຫາຍທີ່ເກີດຂຶ້ນ ຕໍ່ຄ່າພາສີ ແລະ ພັນທະອື່ນ ຕາມກົດໝາຍ ໃນການເຄື່ອນຍ້າຍສິນຄ້າອອກຈາກເຂດປອດພາສີ ທີ່ນໍາອອກໄປຫາດ່ານພາສີຊາຍແດນ ບ່ອນສົ່ງອອກ;

4. ອະນຸຍາດໃຫ້ເຈົ້າໜ້າທີ່ພາສີ ເຂົ້າໄປໃນເຂດປອດພາສີ ຫຼື ສະຖານທີ່ດໍາເນີນກິດຈະການໃນເຂດປອດພາສີ ເພື່ອສອບຖາມ, ກວດກາເອກະສານ ແລະ ສິນຄ້າ ຕາມຄວາມເໝາະສົມ. ໃນກໍລະນີມີຂໍ້ມູນສົງໄສວ່າ ສິນຄ້ານໍາເຂົ້າມາເຂດປອດພາສີ ເປັນສິນຄ້າປະເພດເກືອດຫ້າມ, ສິນຄ້າປະເພດຄວບຄຸມ ເຊັ່ນ ສິນຄ້າທີ່ນອນຢູ່ໃນບັນຊີຂອງສົນທິສັນຍາສາກົນວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (The Convention on International Trade in Endangered Species of Wild Fauna and Flora-CITES), ສິນຄ້າລະເມີດຊັບສິນທາງປັນຍາ, ສານເຄມີທີ່ທໍາລາຍຊັ້ນໂອໂຊນ (Ozone Depleting Substance-ODS) ຫຼື ສິນຄ້າ ທີ່ບໍ່ອະນຸຍາດໃຫ້ນໍາເຂົ້າໃນເຂດປອດພາສີນັ້ນ ເຈົ້າໜ້າທີ່ພາສີ ມີສິດສອບຖາມຂໍ້ມູນ, ກວດກາເອກະສານ ແລະ ສິນຄ້າ ລວມທັງກວດຄົ້ນໂຮງງານ, ອາຄານ ຢູ່ໃນເຂດປອດພາສີນັ້ນ ໂດຍບໍ່ຈໍາເປັນມີເອກະສານຂໍກວດຄົ້ນ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 27 ການເຮັດສັນຍາຄໍ້າປະກັນ ແລະ ການວາງເງິນມັດຈໍາ**

ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງເຮັດສັນຍາຄໍ້າປະກັນກັບລັດຖະການພາສີ ແລະ ວາງເງິນມັດຈໍາ ໃນຮູບແບບໜັງສືຄໍ້າປະກັນຈາກທະນາຄານ ຫຼື ສະຖາບັນການເງິນອື່ນ ຕາມກໍລະນີ ດັ່ງນີ້:

1. ຜູ້ລົງທຶນກິດຈະການໃນເຂດປອດພາສີ ກ່ຽວກັບການນໍາເຂົ້າຍານພາຫະນະທາງບົກ ແລະ ອາໄຫຼ່ມາຈາກຕ່າງປະເທດ ຕ້ອງວາງເງິນມັດຈໍາ ຈໍານວນ ສາມຕື້ກີບ;

2. ຜູ້ລົງທຶນກິດຈະການໃນເຂດປອດພາສີ ກ່ຽວກັບການນໍາເຂົ້າຊິ້ນສ່ວນປະກອບຍານພາຫະນະ ໃນລະບົບຊີເຄດີ, ສິນຄ້າຟຸມເຟືອຍ ຫຼື ສິນຄ້າຊັ້ນສູງ ເປັນຕົ້ນ ເຄື່ອງດື່ມທີ່ມີທາດເຫຼົ້າ, ຢາສູບ, ນໍ້າຫອມ, ເຄື່ອງສໍາອາງ, ເຄື່ອງປະດັບ ຈາກຕ່າງປະເທດ ຕ້ອງວາງເງິນມັດຈໍາ ຈໍານວນ ໜຶ່ງຕື້ກີບ;

3. ຜູ້ລົງທຶນກິດຈະການອື່ນໃນເຂດປອດພາສີ ນອກຈາກຂໍ້ 1 ແລະ 2 ເທິງນີ້ ບໍ່ຈໍາເປັນຕ້ອງວາງເງິນມັດຈໍາ.

ຜູ້ລົງທຶນກິດຈະການໃນເຂດປອດພາສີ ທີ່ໄດ້ຮັບການຢັ້ງຢືນ ເປັນຜູ້ປະກອບການມາດຕະຖານເອອີໂອ (Authorized Economic Operator-AEO) ສາມາດອອກໜັງສືຄໍ້າປະກັນ ດ້ວຍນິຕິບຸກຄົນແທນວົງເງິນມັດຈໍາ.

ໃນກໍລະນີຜູ້ລົງທຶນກິດຈະການໃນເຂດປອດພາສີ ຫາກລະເມີດກົດໝາຍ ແລະ ລະບຽບການທາງພາສີ ລັດຖະການພາສີ ຈະປະຕິບັດມາດຕະການ ໂດຍແຈ້ງໃຫ້ຜູ້ລະເມີດ ມາເສຍຄ່າພາສີ ແລະ ພັນທະອື່ນພາຍໃນກໍານົດເວລາ ສິບຫ້າວັນ ຖ້າຫາກບໍ່ມາຊໍາລະຄ່າພາສີ ແລະ ພັນທະອື່ນ ຕາມກໍານົດເວລາແລ້ວ ລັດຖະການພາສີ ແຈ້ງໃຫ້ທະນາຄານ ຫຼື ສະຖາບັນການເງິນອື່ນ ທີ່ຄຸ້ມຄອງບັນຊີເງິນຝາກຄໍ້າປະກັນ ເພື່ອໂອນເງິນເຂົ້າໃນບັນຊີງົບປະມານຂອງລັດ ຄົບຕາມຈໍານວນ ແລະ ທັນເວລາ.

## ພາກທີ III
## ລະບຽບການທາງພາສີ ໃນການຄຸ້ມຄອງເຂດປອດພາສີ
### ໝວດທີ 1
### ນະໂຍບາຍ ແລະ ການແຈ້ງພາສີ

**ມາດຕາ 28 ນະໂຍບາຍທາງດ້ານພາສີ ແລະ ພັນທະອື່ນ**

ຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການໃນເຂດປອດພາສີ ຈະໄດ້ຮັບນະໂຍບາຍທາງດ້ານພາສີ ແລະ ພັນທະອື່ນ ດັ່ງນີ້:

1. ການນໍາເຂົ້າ ວັດຖຸປະກອບ, ເຄື່ອງຈັກ ທີ່ບໍ່ສາມາດຜະລິດ ແລະ ສະໜອງໄດ້ພາຍໃນປະເທດ ເພື່ອມາປະກອບເປັນຊັບສິນບັດຄົງທີ່ ແລະ ຮັບໃຊ້ການຜະລິດທາງກົງ ໃນເຂດປອດພາສີ ຈະໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

2. ສິນຄ້າ, ເຄື່ອງຂອງ ທີ່ນໍາເຂົ້າຈາກຕ່າງປະເທດ ມາເກັບຮັກສາໄວ້ຢູ່ໃນເຂດປອດພາສີ ຈະໄດ້ຮັບການງົດເກັບພາສີ ແລະ ພັນທະອື່ນ. ໃນກໍລະນີມີການຈໍາໜ່າຍສິນຄ້າ ເພື່ອການຊົມໃຊ້ພາຍໃນ ຕ້ອງເສຍພາສີ ແລະ ພັນທະອື່ນ ຕາມກົດໝາຍວ່າດ້ວຍພາສີ ໂດຍຖືເອົາມູນຄ່າແຈ້ງ, ອັດຕາພາສີ, ອັດຕາແລກປ່ຽນ ແລະ ຂໍ້ມູນອື່ນ ໃນວັນປະກອບຂໍ້ມູນໃບແຈ້ງພາສີເປັນລາຍລະອຽດ ໃນເວລານໍາອອກຈາກເຂດປອດພາສີ.

**ມາດຕາ 29 ການແຈ້ງພາສີໃນການນໍາສິນຄ້າຈາກຕ່າງປະເທດເຂົ້າໃນເຂດປອດພາສີ**

ການແຈ້ງພາສີໃນການນໍາສິນຄ້າຈາກຕ່າງປະເທດ ເຂົ້າໃນເຂດປອດພາສີ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ການແຈ້ງພາສີໂດຍສັງເຂບ:

ຜູ້ນໍາເຂົ້າ ຫຼື ຜູ້ແຈ້ງພາສີ ຕ້ອງຍື່ນໃບຂົນສົ່ງສິນຄ້າ (Cargo Manifest Declaration) ແລະ ແຈ້ງພາສີໂດຍສັງເຂບ ຢູ່ດ່ານບ່ອນນໍາເຂົ້າ ຫຼື ສະຖານທີ່ ທີ່ລັດຖະການພາສີ ກໍານົດ.

2. ການແຈ້ງພາສີເປັນລາຍລະອຽດ:

- ຜູ້ນໍາເຂົ້າ ຫຼື ຜູ້ແຈ້ງພາສີ ຕ້ອງປະຕິບັດຕາມຂັ້ນຕອນການແຈ້ງພາສີເປັນລາຍລະອຽດ ໃນລະບອບວິດເກັບພາສີ ແລະ ພັນທະອື່ນ ຕາມລະບຽບການ ຕໍ່ສິນຄ້າທີ່ຈະນໍາເຂົ້າໃນເຂດປອດພາສີ ໂດຍນໍາໃຊ້ລະບົບເອເລັກໂຕຣນິກ ຢູ່ດ່ານພາສີບ່ອນນໍາເຂົ້າ, ຫ້ອງການພາສີປະຈໍາເຂດປອດພາສີ ຫຼື ສະຖານທີ່ອື່ນ ທີ່ລັດຖະການພາສີ ກໍານົດ;

- ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບວຽກງານຄຸ້ມຄອງການແຈ້ງພາສີ ກວດກາຄວາມຖືກຕ້ອງທາງດ້ານຂໍ້ມູນ, ເອກະສານ ຕາມລະບຽບການ ກ່ຽວກັບຂັ້ນຕອນການນໍາເຂົ້າ ຕາມກົດໝາຍວ່າດ້ວຍພາສີ ແລະ ລະບຽບການ;

- ການແຈ້ງພາສີເປັນລາຍລະອຽດ ສໍາລັບການນໍາເອົາສິນຄ້າຈາກຕ່າງປະເທດ ເຂົ້າໄປເກັບຮັກສາໄວ້ຢູ່ສະຖານທີ່ເກັບຮັກສາສິນຄ້າໃນເຂດປອດພາສີ ຊຶ່ງສິນຄ້າດັ່ງກ່າວ ເປັນຂອງຜູ້ປະກອບການ ທີ່ບໍ່ໄດ້ລົງທຶນກິດຈະການໃນເຂດປອດພາສີນັ້ນ ມອບໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີເທົ່ານັ້ນ ເປັນຜູ້ແຈ້ງພາສີເປັນລາຍລະອຽດແທນ.

3. ການກວດປ່ອຍສິນຄ້າ:

ການກວດປ່ອຍສິນຄ້າທີ່ຈະເຂົ້າໃນເຂດປອດພາສີ ໃຫ້ດໍາເນີນການຢູ່ບ່ອນແຈ້ງພາສີເປັນລາຍລະອຽດດັ່ງນີ້:

- ໃນກໍລະນີການແຈ້ງພາສີເປັນລາຍລະອຽດ ນອນໃນຄວາມສ່ຽງລະດັບຕໍ່າ (ຊ່ອງສີຂຽວ) ຜູ້ນໍາເຂົ້າ ຫຼື ຜູ້ແຈ້ງພາສີ ສາມາດຮັບເອົາສິນຄ້າຈາກດ່ານພາສີຊາຍແດນ ບ່ອນນໍາເຂົ້າ ໂດຍບໍ່ຕ້ອງຜ່ານການກວດກາສິນຄ້າຕົວຈິງ ຈາກເຈົ້າໜ້າທີ່ພາສີ ຊຶ່ງລະບົບການແຈ້ງພາສີແບບເອເລັກໂຕຣນິກ ຈະຕອບກັບ ຜູ້ນໍາເຂົ້າ ຫຼື ຜູ້ແຈ້ງພາສີ ໃຫ້ຮູ້ເຖິງສະຖານະການກວດປ່ອຍສິນຄ້າ ຈາກເຈົ້າໜ້າທີ່ພາສີ;

- ໃນກໍລະນີການແຈ້ງພາສີເປັນລາຍລະອຽດ ນອນໃນຄວາມສ່ຽງລະດັບກາງ (ຊ່ອງສີເຫຼືອງ) ເຈົ້າໜ້າທີ່ພາສີ ດໍາເນີນການກວດກາຂໍ້ມູນ ແລະ ເອກະສານການແຈ້ງພາສີເປັນລາຍລະອຽດ. ຖ້າເປັນສິນຄ້າທີ່ລັດຄວບຄຸມ ຫຼື ສິນຄ້າທີ່ຈະຕ້ອງຂໍອະນຸຍາດນໍາເຂົ້າຈາກຂະແໜງການທີ່ກ່ຽວຂ້ອງນັ້ນ ຜູ້ນໍາເຂົ້າ ຫຼື ຜູ້ແຈ້ງພາສີຕ້ອງຍື່ນເອກະສານທີ່ກ່ຽວຂ້ອງ ໃຫ້ເຈົ້າໜ້າທີ່ພາສີ ເພື່ອກວດກາ;

- ໃນກໍລະນີການແຈ້ງພາສີເປັນລາຍລະອຽດ ນອນຢູ່ໃນຄວາມສ່ຽງລະດັບສູງ (ຊ່ອງສີແດງ):

+ ເຈົ້າໜ້າທີ່ພາສີ ທີ່ດໍາເນີນການກວດກາສິນຄ້າຕົວຈິງ ຕ້ອງປະຕິບັດຕາມຂັ້ນຕອນ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍພາສີ ແລະ ລະບຽບການ;

+ ຜູ້ນໍາເຂົ້າ ຫຼື ຜູ້ແຈ້ງພາສີ ທີ່ມີຈຸດປະສົງ ຂໍນໍາເອົາສິນຄ້າໄປກວດປ່ອຍຢູ່ເຂດປອດພາສີ ຕ້ອງຍື່ນຄໍາຮ້ອງ ຕໍ່ຫົວໜ້າດ່ານພາສີຊາຍແດນ ບ່ອນນໍາເຂົ້າ ເປັນຜູ້ພິຈາລະນາ ຖ້າຫາກໄດ້ຮັບອະນຸຍາດແລ້ວ ໃຫ້ນໍາໃຊ້ກົນໄກຄຸ້ມຄອງໃນຮູບແບບ ໜົບກົ່ວ, ສາຍຮັດເອເລັກໂຕຣນິກ ຫຼື ລະບົບຕິດຕາມອື່ນ ຂອງລັດຖະການພາສີ ຖ້າເຫັນວ່າຮອດໄລຍະເວລາທີ່ສົມຄວນແລ້ວ ຫາກສິນຄ້າຍັງບໍ່ທັນເຂົ້າໄປໃນເຂດປອດພາສີ ກໍໃຫ້ປະສານສົມທົບກັບເຈົ້າໜ້າທີ່ພາສີ ທີ່ຜູ້ຮັບຜິດຊອບເຂດປອດພາສີ ທັນທີ. ໃນກໍລະນີບໍ່ໄດ້ຮັບອະນຸຍາດ ຫຼື ມີຂໍ້ມູນສົງໄສ

ນັ້ນ ໃຫ້ເຈົ້າໜ້າທີ່ພາສີ ດຳເນີນການກວດກາສິນຄ້າດັ່ງກ່າວ ຕາມເຕັກນິກວິຊາການ ດ້ວຍວິທີການເປີດ ຜ່າບັດ ຫຼື ໄຂຕູ້ບັນຈຸສິນຄ້າ ເພື່ອກວດນັບ ທັງໝົດ ຫຼື ບາງສ່ວນ ແລ້ວແຕ່ກໍລະນີ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ຊັດເຈນ.

ສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ ເພື່ອເກັບຮັກສາຢູ່ເຂດປອດພາສີ ແລະ ໄດ້ຖືກກວດປ່ອຍອອກ ໂດຍເຈົ້າໜ້າທີ່ພາສີນັ້ນ ໃຫ້ຖືວ່າໄດ້ມີການບັນທຶກຂໍ້ມູນລາຍລະອຽດຂອງສິນຄ້າ ກ່ຽວກັບປະເພດ, ປະລິມານ, ນ້ຳໜັກ, ລາຄາ, ອັດຕາພາສີ, ແຫຼ່ງກຳເນີດສິນຄ້າ ຫຼື ຂໍ້ມູນອື່ນ ທີ່ໄດ້ເກັບຮັກສາຢູ່ໃນເຂດປອດພາສີ ຕາມທີ່ຜູ້ນຳເຂົ້າໃນເຂດປອດພາສີ ໄດ້ສົ່ງຂໍ້ມູນໄປຍັງລະບົບເອເລັກໂຕຣນິກຂອງລັດຖະການພາສີ.

ໃນກໍລະນີລັກລອບ, ເກີດຄວາມເສຍຫາຍ ໃນລະຫວ່າງການຂົນສົ່ງສິນຄ້າຈາກດ່ານພາສີຊາຍແດນ ມາຍັງເຂດປອດພາສີນັ້ນ ຜູ້ນຳເຂົ້າ ຫຼື ຜູ້ຂົນສົ່ງ ຕ້ອງຮັບຜິດຊອບຄວາມເສຍຫາຍ ຕໍ່ຄ່າພາສີ ແລະ ພັນທະອື່ນ ຕາມກົດໝາຍ.

ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ຕ້ອງກວດກາຂໍ້ມູນສິນຄ້າ ທີ່ນຳເຂົ້າໃນເຂດປອດພາສີ ໃນລະບົບເອເລັກໂຕຣນິກ ປະຈຳ ວັນ, ເດືອນ, ງວດ ແລະ ປີ ເພື່ອຄຸ້ມຄອງ ແລະ ຕິດຕາມການຮັບ-ສົ່ງສິນຄ້າ ຈາກຫ້ອງການພາສີໃດໜຶ່ງ ໄປຍັງເຂດປອດພາສີ ແລະ ສືບຕໍ່ຕິດຕາມ ແລະ/ຫຼື ຮັບສິນຄ້າ ທີ່ຕ້ອງໄດ້ເກັບຮັກສາໄວ້ໃນເຂດປອດພາສີ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມລະບຽບການ.

ສຳລັບສິນຄ້າ, ເຄື່ອງຂອງ ທີ່ຈະນຳເຂົ້າມາເກັບຮັກສາໄວ້ ຫຼື ສົ່ງອອກຈາກເຂດປອດພາສີ ຕ້ອງໄດ້ບັນຈຸ, ຫຸ້ມຫໍ່ ແລະ ນຳໃຊ້ພາຫະນະຂົນສົ່ງ ທີ່ມີລັກສະນະສະເພາະ ຕາມປະເພດສິນຄ້າ.

### ມາດຕາ 30 ການນຳເອົາສິນຄ້າເຂົ້າໃນເຂດປອດພາສີໂດຍບຸກຄົນອື່ນ

ຜູ້ນຳເອົາສິນຄ້າ ເຂົ້າໃນເຂດປອດພາສີ ຕ້ອງມີສັນຍາກັບຜູ້ລົງທຶນກິດຈະການໃນເຂດປອດພາສີ ພ້ອມທັງແຈ້ງຂໍ້ມູນລາຍລະອຽດ ກ່ຽວກັບສິນຄ້າ, ໄລຍະເວລາ ຫຼື ວັນທີ, ເດືອນ, ປີ ທີ່ໄດ້ອະນຸຍາດນຳເອົາສິນຄ້າ ໄປເກັບຮັກສາ ຫຼື ໃນສະຖານທີ່ ດຳເນີນກິດຈະການໃນເຂດປອດພາສີ ແລະ ແຈ້ງຕໍ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ເພື່ອນຳໃຊ້ເປັນຂໍ້ມູນ ໃນການຕິດຕາມ ແລະ ກວດກາ.

ໃນກໍລະນີອະນຸຍາດໃຫ້ບຸກຄົນອື່ນ ນຳສິນຄ້າເຂົ້າໃນເຂດປອດພາສີຂອງຕົນນັ້ນ ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງຮັບຜິດຊອບຄວາມເສຍຫາຍຕໍ່ຄ່າພາສີ ແລະ ພັນທະອື່ນ ຕາມກົດໝາຍ ເຖິງແມ່ນວ່າຄ່າເສຍຫາຍນັ້ນ ຈະເກີດຂຶ້ນຈາກບຸກຄົນ ທີ່ຕົນອະນຸຍາດ ຫຼື ບໍ່ ກໍຕາມ.

## ໝວດທີ 2
## ການຄວບຄຸມສິນຄ້າອອກຈາກເຂດປອດພາສີ

### ມາດຕາ 31 ການນຳສິນຄ້າຈາກເຂດປອດພາສີໄປຕ່າງປະເທດ

ສິນຄ້ານຳເຂົ້າ ທີ່ເປັນຜະລິດຕະພັນສຳເລັດຮູບ ເພື່ອຈຸດປະສົງ ເຕົ້າໂຮມ, ຄັດແຍກ, ຫຸ້ມຫໍ່ຄືນ, ບັນຈຸ, ເກັບຮັກສາ, ແຈກຢາຍສິນຄ້າ ຊຶ່ງບໍ່ມີຜົນກະທົບຕໍ່ລັກສະນະເດີມຂອງສິນຄ້າ ຫຼື ບໍ່ມີການປ່ຽນແປງເລກລະຫັດສິນຄ້າ ຕາມສາລະບານສິນຄ້າລະບົບເອກະພາບ ເມື່ອຖືກສົ່ງອອກໄປຕ່າງປະເທດ ຈະໄດ້ຮັບການຍົກເວັ້ນພາສີຂາອອກ ແຕ່ຈະຕ້ອງເສຍຄ່າທຳນຽມ ໃນຮູບແບບນຳເຂົ້າເພື່ອສົ່ງອອກຕໍ່ ຕາມລະບຽບການຂອງກະຊວງການເງິນ ໃນແຕ່ລະໄລຍະ.

ໃນກໍລະນີວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ ແລະ ວັດຖຸປະກອບ ທີ່ນຳເຂົ້າຈາກຕ່າງປະເທດ ມາໃນເຂດປອດພາສີ ເພື່ອຜະລິດ, ປຸງແຕ່ງ, ປະກອບ ໃນເວລາສົ່ງອອກໄປຕ່າງປະເທດ ຈະໄດ້ຮັບການຍົກເວັ້ນພາສີ

ຂາອອກ, ຄ່າທຳນຽມ ຫຼື ຄ່າບໍລິການ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີສົ່ງອອກຜະລິດຕະພັນພາຍໃນ ຈະໄດ້ຮັບການຍົກເວັ້ນພາສີຂາອອກ ເວັ້ນເສຍແຕ່ບາງລາຍການສິນຄ້າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ໃນແຕ່ລະໄລຍະ.

**ມາດຕາ 32 ການຄວບຄຸມສິນຄ້າຈາກເຂດປອດພາສີຫາດ່ານພາສີຊາຍແດນບ່ອນສົ່ງອອກ**

ການນຳເອົາສິນຄ້າອອກຈາກເຂດປອດພາສີ ໂດຍຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງປະກອບຂໍ້ມູນເຂົ້າໃນການແຈ້ງພາສີເປັນລາຍລະອຽດຂາອອກ (Export-EX) ຍື່ນຕໍ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ເພື່ອການສົ່ງອອກ ໂດຍຕ້ອງສົ່ງຂໍ້ມູນການແຈ້ງພາສີເປັນລາຍລະອຽດ ກ່ອນສິນຄ້າຈະຖືກເຄື່ອນຍ້າຍອອກຈາກເຂດປອດພາສີ ໄປຫາດ່ານພາສີຊາຍແດນບ່ອນສົ່ງອອກ ແລະ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ດຳເນີນການກວດປ່ອຍສິນຄ້າອອກຈາກເຂດປອດພາສີ ຕາມກົດໝາຍວ່າດ້ວຍພາສີ ແລະ ດຳລັດສະບັບນີ້.

**ມາດຕາ 33 ການຄວບຄຸມສິນຄ້າອອກຈາກເຂດປອດພາສີ ເພື່ອສົ່ງອອກຕ່າງປະເທດຜ່ານທາງໄປສະນີ**

ການຄວບຄຸມສິນຄ້າອອກຈາກເຂດປອດພາສີ ເພື່ອສົ່ງອອກຕ່າງປະເທດຜ່ານທາງໄປສະນີ ໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ຜູ້ສົ່ງອອກ ນຳສິນຄ້າທີ່ໄດ້ຜ່ານລະບຽບການທາງພາສີ ແລະ ກວດປ່ອຍແລ້ວ ຊຶ່ງເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບຢູ່ເຂດປອດພາສີ ໜີບກົ່ວ ຫຼື ສາຍຮັດເອເລັກໂຕຣນິກ ໃສ່ຫີບຫໍ່ ຫຼື ພາຊະນະບັນຈຸ ທີ່ບໍ່ສາມາດເປີດສິນຄ້າອອກໄດ້ ພ້ອມດ້ວຍໃບແຈ້ງພາສີເປັນລາຍລະອຽດຂາອອກ (Export-EX) ແລະ ໃບຂົນສິນຄ້າພິເສດ ໄປຝາກສົ່ງໂດຍທັນທີ ຢູ່ຫ້ອງການໄປສະນີ ທີ່ໄດ້ຮັບອະນຸຍາດຈາກລັດຖະການພາສີ ໃຫ້ເປັນຈຸດສົ່ງອອກ;

2. ເມື່ອຜູ້ສົ່ງອອກ ໄດ້ດຳເນີນການຝາກພັດສະດຸພັນທາງໄປສະນີ ລະຫວ່າງປະເທດ ຫຼື ໃບຮັບຝາກໄປສະນີ ລະຫວ່າງປະເທດ ທີ່ຮີບດ່ວນ ຫຼື ເອກະສານອື່ນ ທີ່ຫ້ອງການໄປສະນີ ກຳນົດ ໂດຍການຕິດສະແຕມ ແລະ ລົງລາຍເຊັນ ທີ່ໄດ້ຮັບຝາກຈາກພະນັກງານໄປສະນີແລ້ວ ໃຫ້ຄັດຕິດເອກະສານຮັບຝາກ ແລະ ໃບແຈ້ງພາສີເປັນລາຍລະອຽດຂາອອກ (Export-EX) ແລະ ສົ່ງຄືນໃບແຈ້ງພາສີເປັນລາຍລະອຽດຂາອອກ (Export-EX) ແລະ ເອກະສານປະກອບດັ່ງກ່າວ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ພາຍໃນກຳນົດເວລາ ສາມວັນ ລັດຖະການ ນັບແຕ່ວັນໄດ້ກວດປ່ອຍ;

3. ໃນກໍລະນີກວດພົບຫີບຫໍ່ຂອງສິນຄ້າ ຢູ່ໃນສະພາບທີ່ແຕກຫັກ, ເສຍຫາຍ, ກົ່ວ ຫຼື ສາຍຮັດເອເລັກໂຕຣນິກ ບໍ່ຢູ່ໃນສະພາບເດີມ ໃຫ້ພະນັກງານໄປສະນີ ແຈ້ງຕໍ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບ ໃນເຂດປອດພາສີຊາບ ທັນທີ.

**ມາດຕາ 34 ການນຳສິນຄ້າອອກຈາກເຂດປອດພາສີ ເພື່ອຈຳໜ່າຍພາຍໃນປະເທດ**

ຜູ້ລົງທຶນກິດຈະການໃນເຂດປອດພາສີ ຫຼື ຜູ້ນຳສິນຄ້າອອກຈາກເຂດປອດພາສີ ທີ່ນຳສິນຄ້າອອກຈາກເຂດປອດພາສີ ເພື່ອຈຳໜ່າຍພາຍໃນປະເທດ ຕ້ອງດຳເນີນການແຈ້ງພາສີເປັນລາຍລະອຽດ ຜ່ານລະບົບເອເລັກໂຕຣນິກຂອງລັດຖະການພາສີ ກ່ອນການເຄື່ອນຍ້າຍສິນຄ້າ. ສຳລັບການຄິດໄລ່ຄ່າພາສີ ແລະ ພັນທະອື່ນ ໃຫ້ອີງຕາມລາຄາຂອງສິນຄ້າ, ອັດຕາພາສີ ແລະ ພັນທະອື່ນ, ອັດຕາແລກປ່ຽນ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍ

ອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍໃຫ້ນຳໃຊ້ລະບອບພາສີ ແລະ ຫຼັກການກຳນົດມູນຄ່າແຈ້ງພາສີ ແລະ ລະບຽບການ ກ່ຽວກັບແຫຼ່ງກຳເນີດສິນຄ້າ ພາຍໃຕ້ຂອບສັນຍາການຄ້າ ທີ່ ສປປ ລາວ ເປັນພາຄີ ຄືກັນກັບການນຳເຂົ້າສິນຄ້າຈາກຕ່າງປະເທດ ຕາມໄລຍະເວລາ ການເກັບຮັກສາສິນຄ້າໃນເຂດປອດພາສີ.

ໃນກໍລະນີສິນຄ້າ ຫາກໄດ້ຜະລິດ, ປຸງແຕ່ງ, ປະກອບ ຊຶ່ງໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບຄຸນລັກສະນະຂອງສິນຄ້າ ທີ່ມີເງື່ອນໄຂຄົບຖ້ວນ ເຖິງແຫຼ່ງກຳເນີດສິນຄ້າ, ຖ້າມີການນຳເຂົ້າສິນຄ້າດັ່ງກ່າວ ໃຫ້ຖືວ່າຄືກັນກັບການນຳເຂົ້າສິນຄ້າຈາກຕ່າງປະເທດ ແລະ ຈະໄດ້ຮັບສິດຜົນປະໂຫຍດດ້ານອັດຕາພາສີຂາເຂົ້າ ຄືກັນກັບການນຳເຂົ້າສິນຄ້າໃນກອບການຮ່ວມມືຕ່າງໆ ທີ່ ສປປ ລາວ ເປັນພາຄີ.

ລະບົບເອເລັກໂຕຣນິກຂອງລັດຖະການພາສີ ຈະຕອບກັບເລກທີໃບແຈ້ງພາສີເປັນລາຍລະອຽດຂາເຂົ້າ (Import-IM) ໄປຍັງຜູ້ສົ່ງຂໍ້ມູນ ຊຶ່ງຖືວ່າເປັນການຍື່ນໃບແຈ້ງພາສີເປັນລາຍລະອຽດຂາເຂົ້າ ທີ່ຖືກຕ້ອງ ຕໍ່ລັດຖະການພາສີແລ້ວ.

## ໝວດທີ 3
## ລະບຽບການທາງພາສີອື່ນ ກ່ຽວກັບເຂດປອດພາສີ

### ມາດຕາ 35 ການຄວບຄຸມທາງເອເລັກໂຕຣນິກ

ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງຕິດຕັ້ງລະບົບ ແລະ ອຸປະກອນທີ່ສາມາດເຊື່ອມໂຍງຂໍ້ມູນແບບອອນລາຍກັບລັດຖະການພາສີ ຫຼື ການສົ່ງຂໍ້ມູນທາງເອເລັກໂຕຣນິກ ໃຫ້ລັດຖະການພາສີ ເພື່ອເຮັດໃຫ້ການເຄື່ອນໄຫວດຳເນີນທຸລະກຳທາງທຸລະກິດ ຕິດພັນກັບການແຈ້ງພາສີ ເຊັ່ນ ຂໍ້ມູນການແຈ້ງພາສີ, ຂໍ້ມູນການບັນທຶກສິນຄ້າ ເຂົ້າ-ອອກ ສາງ, ເຂດປອດພາສີ.

### ມາດຕາ 36 ການລາຍງານການເຄື່ອນໄຫວວຽກງານຂອງຜູ້ລົງທຶນກິດຈະການ

ການເຄື່ອນໄຫວວຽກງານຂອງຜູ້ລົງທຶນກິດຈະການ ທີ່ຕ້ອງລາຍງານ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ມີ ດັ່ງນີ້:

1. ສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ ທີ່ຈະເກັບຮັກສາ;
2. ສິນຄ້າທີ່ນຳເຂົ້າຈາກເຂດປອດພາສີອື່ນ;
3. ການສົ່ງສິນຄ້າອອກຈາກເຂດປອດພາສີ;
4. ການເຄື່ອນຍ້າຍສິນຄ້າ ໄປຍັງເຂດປອດພາສີອື່ນ;
5. ການຊື້ ຂາຍສິນຄ້າ ພາຍໃນເຂດປອດພາສີ;
6. ການຄຸ້ມຄອງສາງ, ການກະກຽມສົ່ງບັນຊີລາຍການສິນຄ້າຄ້າງສາງ ແລະ ບົດລາຍງານການເງິນສຸດທ້າຍ (Final Financial Statement);
7. ສິນຄ້າເສື່ອມຄຸນ, ການກຳຈັດສິ່ງເສດເຫຼືອ ແລະ ຊິ້ນສ່ວນເສດເຫຼືອອື່ນ ທີ່ສາມາດນຳໃຊ້ໄດ້;
8. ມາດຕະການປ້ອງກັນ ຕໍ່ການລັກຊັບ ຫຼື ຄວາມເສຍຫາຍຈາກໄພພິບັດຂອງສິນຄ້າ ຫຼື ຜະລິດຕະພັນ ແລະ ມາດຕະການອື່ນ;
9. ການຄວບຄຸມປະຕູເຂົ້າ-ອອກ (Gate Access Control/ E-Gate);

10. ການຄຸ້ມຄອງການດຳເນີນງານ ກ່ຽວກັບການຜະລິດ, ປຸງແຕ່ງ, ປະກອບ, ຂົນສົ່ງ, ຄັງສິນຄ້າ ແລະ ກິດຈະກຳອື່ນ ຢູ່ສະຖານທີ່ ພາຍໃນເຂດປອດພາສີ;

11. ການຂົນສົ່ງສິນຄ້າ ແລະ ການຍົກເລີກບັນຊີ ຫຼັງຈາກການດຳເນີນການກວດສອບ;

12. ການກວດປ່ອຍສິນຄ້າ, ການຂົນສົ່ງສິນຄ້າເກີນກຳນົດ, ການບັນຈຸສິນຄ້າ ແບບບໍ່ເຕັມ ຫຼື ສິນຄ້າເກີນກຳນົດ;

13. ການດຳເນີນຂະບວນການປັບປຸງສິນຄ້າ (Cargo Processing), ການປັບສະພາບຄືນ, ການຫຸ້ມຫໍ່, ການຕິດ ຫຼື ການກວດແກ້ເຄື່ອງໝາຍ ແລະ/ຫຼື ການປະມວນຜົນໝາຍເລກກ່ອງ, ຫີບຫໍ່ຂົນສົ່ງ (Serial Number Processing);

14. ການກວດກາຕົວຢ່າງ, ເກັບຕົວຢ່າງ ແລະ ວິເຄາະວິໄຈສ່ວນປະກອບຂອງສິນຄ້າ;

15. ການກວດກາຕູ້ບັນຈຸສິນຄ້າເປົ່າ ເຂົ້າ-ອອກ ຫຼື ຄ້າງສາງ ເກີນກຳນົດ;

16. ການເກັບຮັກສາຂໍ້ມູນ ໃນລະບົບເອເລັກໂຕຣນິກ ກ່ຽວກັບການແຈ້ງພາສີ, ບັນທຶກ, ຄຸ້ມຄອງ ແລະ ຄວບຄຸມສິນຄ້າ;

17. ເຫດການທີ່ເປັນການລະເມີດກົດໝາຍ ແລະ/ຫຼື ເຫດການອື່ນ ທີ່ຜິດປົກກະຕິ;

18. ການປະຕິບັດລະບຽບການ ຄຸ້ມຄອງແຫຼ່ງກຳເນີດສິນຄ້າ ຫຼື ການຕິດສະຫຼາກສິນຄ້າ;

19. ບັນຫາອື່ນ ທີ່ລັດຖະການພາສີ ກຳນົດ.

**ມາດຕາ 37 ການລາຍງານສິນຄ້າເຂົ້າ-ອອກເຂດປອດພາສີ**

ການນຳເອົາສິນຄ້າຈາກຕ່າງປະເທດ ເຂົ້າມາເກັບຮັກສາໃນເຂດປອດພາສີ ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງລາຍງານການສົ່ງຂໍ້ມູນ ກ່ຽວກັບການແຈ້ງພາສີທາງເອເລັກໂຕຣນິກ ໃຫ້ລັດຖະການພາສີ ແລະ ດຳເນີນການເກັບຮັກສາຂໍ້ມູນດັ່ງກ່າວ, ພາຍຫຼັງໄດ້ຖືກຮັບຮອງຈາກລັດຖະການພາສີ;

ສຳລັບສົ່ງສິນຄ້າອອກໄປຕ່າງປະເທດ ຫຼື ເຄື່ອນຍ້າຍສິນຄ້າໃດໜຶ່ງ ໄປຍັງເຂດປອດພາສີອື່ນ ຜູ້ສົ່ງອອກ ຫຼື ຜູ້ລົງທຶນກິດຈະການ ຕ້ອງລາຍງານສິນຄ້າ ທີ່ຖືກເກັບຮັກສາໄວ້ໃນເຂດປອດພາສີ ດ້ວຍການສົ່ງຂໍ້ມູນທາງເອເລັກໂຕຣນິກ ໃຫ້ລັດຖະການພາສີ, ພາຍຫຼັງໄດ້ຖືກຮັບຮອງຈາກລັດຖະການພາສີແລ້ວ ຈຶ່ງສາມາດຂົນສິນຄ້າຂຶ້ນພາຫະນະຂົນສົ່ງ ແລະ ເຄື່ອນຍ້າຍໄດ້.

**ມາດຕາ 38 ການວາງສະແດງ**

ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງຍື່ນຄຳຮ້ອງ ພ້ອມທັງຄັດຕິດເອກະສານທີ່ກ່ຽວຂ້ອງຂອງຄະນະຈັດງານວາງສະແດງ ໃຫ້ແກ່ລັດຖະການພາສີ ຈຶ່ງສາມາດນຳເອົາສິນຄ້າອອກໄປວາງສະແດງໄດ້ ຕາມລະບຽບການ, ພາຍຫຼັງສຳເລັດການວາງສະແດງແລ້ວ ຕ້ອງນຳສິນຄ້າດັ່ງກ່າວກັບຄືນເຂດປອດພາສີ ຕາມກຳນົດເວລາ, ຖ້າຫາກມີການຈຳໜ່າຍພາຍໃນປະເທດ ກໍຕ້ອງໄດ້ເສຍພາສີ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 39 ການແຈ້ງ, ການເສຍພາສີ ແລະ ພັນທະອື່ນ ເພີ່ມເຕີມ**

ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງແຈ້ງເສຍພາສີນຳເຂົ້າ ແລະ ພັນທະອື່ນ ເພີ່ມເຕີມ ໃນກໍລະນີ ດັ່ງນີ້:

1. ຜູ້ລົງທຶນກິດຈະການໃນເຂດປອດພາສີ ໄດ້ກວດເຫັນວ່າ ສິນຄ້າທີ່ເກັບຮັກສາໄວ້ ໃນເຂດປອດພາສີ ໄດ້ຖືກສູນຫາຍຍ້ອນການລັກຊັບ ອອກຈາກບ່ອນເກັບຮັກສາ ໂດຍມີເອກະສານຫຼັກຖານຢັ້ງຢືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 40 ຂອງດຳລັດສະບັບນີ້;

2. ຜູ້ລົງທຶນກິດຈະການໃນເຂດປອດພາສີ ຫາກພົບເຫັນວ່າ ສິນຄ້າທີ່ເກັບຮັກສາໄວ້ ໃນເຂດປອດພາສີນັ້ນ ມີປະລິມານໜ້ອຍກວ່າ ຂໍ້ມູນທີ່ບັນທຶກໄວ້ ໃນລະບົບບັນຊີ. ໃນກໍລະນີເຈົ້າໜ້າທີ່ພາສີ ໄດ້ກວດກາສິນຄ້າຕົວຈິງ ທີ່ເກັບຮັກສາ ໃນເຂດປອດພາສີນັ້ນ ມີຈຳນວນ ຫຼື ປະລິມານ ຫຼາຍກວ່າ ຂໍ້ມູນທີ່ບັນທຶກໄວ້ ໃນລະບົບບັນຊີນັ້ນ ໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີ ນຳຫຼັກຖານມາຊີ້ແຈງຕໍ່ເຈົ້າໜ້າທີ່ພາສີ. ຖ້າຫາກມີຫຼັກຖານ ແລະ ເຫດຜົນພຽງພໍ ກໍຈະອະນຸຍາດ ໃຫ້ປັບປຸງຂໍ້ມູນ ໃນລະບົບບັນຊີ. ຖ້າຫາກບໍ່ມີຫຼັກຖານ ແລະ ເຫດຜົນພຽງພໍ ກໍຈະຖືວ່າເປັນການກະທຳຜິດທາງພາສີ;

3. ສິນຄ້າໃນເຂດປອດພາສີ ໄດ້ເຄື່ອນຍ້າຍເຂົ້າໄປໃນເຂດອື່ນ ເພື່ອການສ້ອມແປງ, ທົດສອບ, ກວດກາ ຫຼື ປຸງແຕ່ງ ຕາມສັນຍາ ຫາກບໍ່ສົ່ງກັບຄືນເຂດປອດພາສີ ພາຍໃນກຳນົດເວລາ ຫົກເດືອນ ນັບແຕ່ວັນໄດ້ຮັບອະນຸມັດ ເປັນຕົ້ນໄປ ກ່ອນວັນໝົດກຳນົດ ຫາກຜູ້ລົງທຶນກິດຈະການ ມີຈຸດປະສົງຂໍຕໍ່ເວລາ ເຈົ້າໜ້າທີ່ພາສີຈະພິຈາລະນາຕໍ່ເວລາໄດ້ ບໍ່ເກີນ ສາມສິບວັນ ຫາກສິນຄ້າຍັງບໍ່ທັນຖືກສົ່ງກັບຄືນໄປເຂດປອດພາສີ ໃຫ້ດຳເນີນການເສຍພາສີ ແລະ ພັນທະອື່ນ ຕາມກົດໝາຍ.

### ມາດຕາ 40 ການເກີດຄວາມເສຍຫາຍຂອງສິນຄ້າໃນເຂດປອດພາສີ

ໃນກໍລະນີສິນຄ້າໃນເຂດປອດພາສີ ເກີດຄວາມເສຍຫາຍ ໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີ ປະຕິບັດ ດັ່ງນີ້:

1. ສິນຄ້າ ຖືກເສຍຫາຍຈາກການລັກຊັບ ຕ້ອງລາຍງານ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ແລະ ເຈົ້າໜ້າທີ່ຕຳຫຼວດ ເພື່ອຂໍໃບຢັ້ງຢືນການເສຍຫາຍ ໄວ້ເປັນຫຼັກຖານ;

2. ສິນຄ້າຖືກເສຍຫາຍຈາກນ້ຳຖ້ວມ, ພາຍຸ, ອັກຄີໄພ ຫຼື ໄພພິບັດທາງທຳມະຊາດອື່ນ ຕ້ອງໄດ້ແຈ້ງເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ເພື່ອພິຈາລະນາ ຫັກລົບຈຳນວນສິນຄ້າ ທີ່ຖືກເສຍຫາຍດັ່ງກ່າວ ອອກຈາກການບັນທຶກບັນຊີ ຫຼັງຈາກການກວດສອບ ແລະ ສິ່ງເສດເຫຼືອທີ່ເກີດຂຶ້ນນັ້ນ ຈະຕ້ອງຖືກປະເມີນ ຫຼື ຍົກເວັ້ນພາສີ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 41 ການທຳລາຍສິນຄ້າ

ການທຳລາຍສິນຄ້າ ໃຫ້ປະຕິບັດ ດັ່ງນີ້:

1. ສິນຄ້າທີ່ໄດ້ຮັບອະນຸຍາດ ໃຫ້ນຳອອກຈາກເຂດປອດພາສີ ເພື່ອທຳລາຍ ປະກອບດ້ວຍ:

- ສິນຄ້າທີ່ເສື່ອມຄຸນນະພາບ, ສິນຄ້າໝົດອາຍຸນຳໃຊ້, ສິນຄ້າທີ່ໃຊ້ການບໍ່ໄດ້ ຫຼື ສິນຄ້າທີ່ບໍ່ໄດ້ໃຊ້;
- ສິນຄ້າທີ່ມີເງື່ອນໄຂ ຫຼື ເຫດຜົນ ທີ່ຈະຖືກທຳລາຍ.

2. ການທຳລາຍສິນຄ້າ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ເທິງນີ້ ຕ້ອງໄດ້ຮັບອະນຸຍາດຈາກກະຊວງການເງິນ ແລະ ໃຫ້ປະຕິບັດ ດັ່ງນີ້:

- ຜູ້ທີ່ມີຈຸດປະສົງ ທຳລາຍສິນຄ້າທີ່ເກັບຮັກສາໄວ້ ໃນເຂດປອດພາສີ ໃຫ້ຍື່ນຄຳຮ້ອງຕໍ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີນັ້ນ. ເມື່ອໄດ້ຮັບຄຳຮ້ອງແລ້ວ ເຈົ້າໜ້າທີ່ພາສີນັ້ນ ຕ້ອງດຳເນີນການກວດກາລາຍລະອຽດ ກ່ຽວກັບຊະນິດ, ສະພາບ, ປະລິມານ ແລະ ນ້ຳໜັກຂອງສິນຄ້າດັ່ງກ່າວ ວ່າຖືກຕ້ອງຕາມຄຳຮ້ອງ ແລະ ສິນຄ້ານັ້ນ ເປັນສິນຄ້າທີ່ອະນຸຍາດໃຫ້ທຳລາຍ ແລ້ວລາຍງານ ໃຫ້ກະຊວງການເງິນ ເພື່ອພິຈາລະນາ;

- ກະຊວງການເງິນ ເປັນຜູ້ພິຈາລະນາອະນຸຍາດ ທຳລາຍສິນຄ້າ ໂດຍແຕ່ງຕັ້ງຄະນະກຳມະການທຳລາຍ ຊຶ່ງປະກອບດ້ວຍ ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ເປັນຫົວໜ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຢ່າງໜ້ອຍ ຫ້າຄົນ ປະກອບເປັນຄະນະກຳມະການ;

- ໃນການທຳລາຍສິນຄ້າ ໃຫ້ດຳເນີນດ້ວຍການ ຈູດ ຫຼື ຝັງດິນ, ຕັດເປັນຕ່ອນນ້ອຍໆ ຫຼື ດ້ວຍວິທີອື່ນ ທີ່ເໝາະສົມ ໂດຍໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ. ເມື່ອທຳລາຍແລ້ວ ໃຫ້ຄະນະກຳມະການ ແລະ ຜູ້ຮ້ອງຂໍ ລົງລາຍເຊັນໃສ່ບົດບັນທຶກການທຳລາຍ ໄວ້ເປັນຫຼັກຖານ ໃນການຫັກລົບຂໍ້ມູນ ໃນລະບົບບັນຊີ ແລະ ເກັບຮັກສາໄວ້;

- ໃນກໍລະນີມີຄວາມຈຳເປັນ ທີ່ບໍ່ສາມາດທຳລາຍ ໃນເຂດປອດພາສີນັ້ນໄດ້ ຄະນະກຳມະການ ຕ້ອງພິຈາລະນາ ໃຫ້ໄປທຳລາຍຢູ່ນອກເຂດປອດພາສີ ກໍໄດ້;

- ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ລາຍງານຜົນຂອງການທຳລາຍສິນຄ້າດັ່ງກ່າວ ໃຫ້ກະຊວງການເງິນ ພ້ອມດ້ວຍຮູບຖ່າຍ ກ່ອນທຳລາຍ, ເວລາທຳລາຍ ແລະ ຫຼັງທຳລາຍສິນຄ້າ ເພື່ອເກັບຮັກສາໄວ້ເປັນຫຼັກຖານ ໃນການກວດສອບ.

### ມາດຕາ 42 ການເຄື່ອນຍ້າຍສິນຄ້າໃນເຂດປອດພາສີ ຫຼື ໄປເຂດປອດພາສີອື່ນ

ຜູ້ລົງທຶນກິດຈະການໃນເຂດປອດພາສີ ສາມາດເຄື່ອນຍ້າຍສິນຄ້າໄດ້ ຕາມສະພາບນຳເຂົ້າ ຫຼື ສິນຄ້ານຳເຂົ້າ ທີ່ໄດ້ຜ່ານການຜະລິດ, ປຸງແຕ່ງ, ປະກອບ ຫຼື ຂະບວນການອື່ນ ໃຫ້ແກ່ຜູ້ລົງທຶນກິດຈະການໃນເຂດປອດພາສີດຽວກັນ, ເຂດປອດພາສີອື່ນ ຫຼື ຜູ້ລົງທຶນກິດຈະການປອດພາສີ ໃນເຂດເສດຖະກິດພິເສດ, ເຂດເສດຖະກິດອື່ນ, ເຂດໂລຊິດສະຕິກ ຫຼື ຕົວເມືອງອັດສະລິຍະ ໂດຍໃຫ້ປະຕິບັດ ດັ່ງນີ້:

1. ການເຄື່ອນຍ້າຍສິນຄ້າໃນເຂດປອດພາສີດຽວກັນ:

- ຍື່ນຄຳຮ້ອງ ພ້ອມດ້ວຍສັນຍາຊື້ ຂາຍ ຕໍ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ;

- ເມື່ອໄດ້ຮັບອະນຸຍາດແລ້ວ ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ຕ້ອງກວດກາລາຍລະອຽດຂອງສິນຄ້າ ແລະ ເອກະສານ ໃຫ້ຖືກຕ້ອງ ແລະ ບັນທຶກຜົນການກວດກາ ລົງໃນລະບົບເອເລັກໂຕຣນິກ ຫຼື ແບບພິມ ທີ່ລັດຖະການພາສີ ກຳນົດເປັນ ສາມ ສະບັບ ໃຫ້ຜູ້ເຄື່ອນຍ້າຍ, ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ແລະ ຜູ້ຮັບສິນຄ້າ ເກັບຮັກສາໄວ້. ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງບັນທຶກຂໍ້ມູນການເຄື່ອນຍ້າຍ ໄວ້ໃນລະບົບເອເລັກໂຕຣນິກ ຫຼື ຕາມແບບພິມ ທີ່ລັດຖະການພາສີ ກຳນົດ ເພື່ອໃຫ້ເຈົ້າໜ້າທີ່ພາສີ ສາມາດກວດສອບໄດ້ ໂດຍສົມທຽບກັບບົດລາຍງານ ປະຈຳ ເດືອນ, ງວດ ແລະ ປີ ຂອງຈຳນວນສິນຄ້າທີ່ຍັງເຫຼືອ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

2. ການເຄື່ອນຍ້າຍສິນຄ້າໃນເຂດປອດພາສີອື່ນ ຫຼື ຜູ້ລົງທຶນກິດຈະການປອດພາສີ ໃນເຂດເສດຖະກິດພິເສດ, ເຂດເສດຖະກິດອື່ນ, ເຂດໂລຊິດສະຕິກ ຫຼື ຕົວເມືອງອັດສະລິຍະ:

- ຍື່ນຄຳຮ້ອງ ພ້ອມດ້ວຍສັນຍາຊື້ ຂາຍ ຕໍ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ;

- ເມື່ອໄດ້ຮັບອະນຸຍາດແລ້ວ ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ຕ້ອງກວດກາລາຍລະອຽດຂອງສິນຄ້າ ແລະ ເອກະສານ ຖ້າເຫັນວ່າຖືກຕ້ອງ ກໍອະນຸຍາດໃຫ້ຜູ້ຮ້ອງຂໍ ດຳເນີນການແຈ້ງພາສີເປັນລາຍລະອຽດ ຕາມລະບອບພາສີ ພ້ອມທັງປະກອບເອກະສານເຄື່ອນຍ້າຍພາຍໃນ ໃນລະບົບເອເລັກໂຕຣນິກ ຫຼື ຕາມແບບພິມ ທີ່ລັດຖະການພາສີ ກຳນົດ ແລະ ໃຫ້ຖືວ່າສິນຄ້າຖືກເຄື່ອນຍ້າຍອອກຈາກເຂດປອດພາສີໄດ້ສົ່ງອອກໄປເຂດອື່ນແລ້ວ ແລະ ໃຫ້ຜູ້ລົງທຶນກິດຈະການ ທີ່ໄດ້ຮັບການເຄື່ອນຍ້າຍສິນຄ້ານັ້ນ ບັນທຶກຂໍ້ມູນເຂົ້າໃນບັນຊີລະບົບສາງ ເພື່ອຄຸ້ມຄອງ ແລະ ຕິດຕາມ ກວດກາຕໍ່ໄປ.

3. ຜູ້ມອບ ແລະ ຜູ້ຮັບສິນຄ້າ ເປັນຜູ້ຮັບຜິດຊອບຮ່ວມກັນ ໃນກໍລະນີເກີດຄວາມເສຍຫາຍຕໍ່ຄ່າພາສີ ແລະ ພັນທະອື່ນ ຕາມກົດໝາຍວ່າດ້ວຍພາສີ.

**ມາດຕາ 43 ການເອົາສິນຄ້າຈາກເຂດປອດພາສີ ບັນຈຸໃສ່ຕູ້ບັນຈຸສິນຄ້າຮ່ວມກັບສິນຄ້າ ໃນເຂດປອດພາສີອື່ນ**

ການເອົາສິນຄ້າຈາກເຂດປອດພາສີ ບັນຈຸໃສ່ຕູ້ບັນຈຸສິນຄ້າ ຮ່ວມກັບສິນຄ້າໃນເຂດປອດພາສີອື່ນ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ລົງທຶນກິດຈະການໃນເຂດປອດພາສີ ຫຼື ຜູ້ສົ່ງອອກ ໃນເຂດປອດພາສີໃດໜຶ່ງ ທີ່ມີຈຸດປະສົງນໍາເອົາສິນຄ້າໄປບັນຈຸໃສ່ຕູ້ບັນຈຸສິນຄ້າ ຮ່ວມກັບຜູ້ລົງທຶນກິດຈະການ ຫຼື ຜູ້ສົ່ງອອກ ໃນເຂດປອດພາສີອື່ນ ເພື່ອສົ່ງອອກໄປຕ່າງປະເທດ ຕ້ອງຍື່ນຄໍາຮ້ອງ ພ້ອມດ້ວຍເອກະສານສະແດງເຈດຈໍານົງຮ່ວມກັນ ຊຶ່ງຕ້ອງລະບຸລາຍລະອຽດ ກ່ຽວກັບສິນຄ້າຂອງຜູ້ລົງທຶນກິດຈະການ ຫຼື ຜູ້ສົ່ງອອກແຕ່ລະຄົນ ທີ່ຖືກບັນຈຸໃສ່ຕູ້ສິນຄ້ານັ້ນເພື່ອພິຈາລະນາອະນຸຍາດ ແລະ ລະບຸໝາຍເລກຕູ້ບັນຈຸສິນຄ້າ ທີ່ຈະຖືກບັນຈຸເຂົ້າໃນຄໍາຮ້ອງຂໍດຽວກັນ;

2. ເມື່ອເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ໄດ້ຮັບຄໍາຮ້ອງ ແລະ ພິຈາລະນາການອະນຸຍາດ ແລະ ກວດປ່ອຍສິນຄ້າແລ້ວ ໃຫ້ສົ່ງສໍາເນົາຄໍາຮ້ອງ ແລະ ເອກະສານການເຄື່ອນຍ້າຍສິນຄ້າ ທີ່ຖືກອະນຸຍາດໃຫ້ແກ່ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ອີກບ່ອນໜຶ່ງ ທີ່ມີການສົ່ງອອກສິນຄ້າຮ່ວມກັນນັ້ນ;

3. ເມື່ອເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີອື່ນ ຈະສົ່ງສິນຄ້າອອກໄປຕ່າງປະເທດ ໄດ້ຮັບໃບແຈ້ງພາສີເປັນລາຍລະອຽດຂາອອກແລ້ວ ໃຫ້ກວດກາ ຕາປະທັບ, ເຄື່ອງໝາຍ ແລະ ຈໍານວນຫີບຫໍ່ ຫາກເຫັນວ່າຖືກຕ້ອງ ຕາມໃບແຈ້ງພາສີເປັນລາຍລະອຽດຂາອອກ ແລະ ຢູ່ໃນສະພາບເດີມ ກໍອະນຸຍາດໃຫ້ບັນຈຸສິນຄ້າເຂົ້າຕູ້ບັນຈຸສິນຄ້າໄດ້;

4. ເມື່ອການບັນຈຸສິນຄ້າເພີ່ມເຕີມ ຄົບຕາມຈໍານວນ ແລະ ປະຕິບັດລະບຽບການທາງພາສີແລ້ວ ໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີ ຫຼື ຜູ້ສົ່ງອອກສຸດທ້າຍ ຫຼື ຜູ້ຕາງໜ້າບໍລິການ ບັນຈຸສິນຄ້າເຂົ້າຕູ້ບັນຈຸສິນຄ້າທັງໝົດ ໃຫ້ນໍາເອກະສານໄປແຈ້ງຜູ້ບໍລິການຂົນສົ່ງ ແລະ ໃຫ້ເຈົ້າໜ້າທີ່ພາສີ ດໍາເນີນການກວດປ່ອຍ ຕາມກົດໝາຍ ແລະ ລະບຽບການ;

5. ຜູ້ລົງທຶນກິດຈະການໃນເຂດປອດພາສີ ຫຼື ຜູ້ສົ່ງສິນຄ້າຂາອອກ ຕ້ອງຮັບຜິດຊອບຮ່ວມກັນ ໃນກໍລະນີລະເມີດກົດໝາຍວ່າດ້ວຍພາສີ, ກົດໝາຍອື່ນ ແລະ ດໍາລັດສະບັບນີ້.

## ໝວດທີ 4
## ການເກັບຮັກສາສິນຄ້າໃນເຂດປອດພາສີ

**ມາດຕາ 44 ການເກັບຮັກສາສິນຄ້າໃນເຂດປອດພາສີ**

ສິນຄ້າທີ່ນໍາເຂົ້າຈາກຕ່າງປະເທດ ສາມາດເກັບຮັກສາໄວ້ ໃນເຂດປອດພາສີ ບໍ່ເກີນ ສອງປີ ແລະ ສາມາດຕໍ່ອາຍຸໄດ້ ບໍ່ເກີນ ໜຶ່ງປີ. ຖ້າຫາກມີການເຄື່ອນຍ້າຍສິນຄ້າ ພາຍໃນເຂດປອດພາສີດຽວກັນ ຫຼື ເຄື່ອນຍ້າຍໄປເຂດປອດພາສີອື່ນ, ເຂດເສດຖະກິດພິເສດ, ເຂດເສດຖະກິດອື່ນ, ເຂດໂລຊິດສະຕິກ ຫຼື ດ່ານເມືອງອັດສະຣິຍະ ໃຫ້ນັບເວລາເກັບມ້ຽນສິນຄ້າດັ່ງກ່າວ ເລີ່ມແຕ່ວັນນໍາເຂົ້າສິນຄ້າເກັບຮັກສາຄັ້ງທໍາອິດ ເປັນຕົ້ນໄປ.

ເມື່ອການເກັບຮັກສາສິນຄ້າໃນເຂດປອດພາສີ ຫາກຄົບກໍານົດເວລາຂ້າງເທິງແລ້ວ ແຕ່ບໍ່ມີການສົ່ງອອກຈາກເຂດປອດພາສີດັ່ງກ່າວ ໃຫ້ຜູ້ລົງທຶນກິດຈະການ ຫຼື ເຈົ້າຂອງສິນຄ້າ ເສຍພາສີ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 45 ການຈັດວາງສິນຄ້າໃນເຂດປອດພາສີ**

ການຈັດວາງສິນຄ້າໃນເຂດປອດພາສີ ໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີ ປະຕິບັດ ດັ່ງນີ້:

1. ຈັດສະຖານທີ່ເກັບຮັກສາສິນຄ້າ ໃຫ້ມີຄວາມປອດໄພ ແລະ ເໝາະສົມ, ມີລະບົບປ້ອງກັນຄວາມປອດໄພ ຫຼື ກ້ອງວົງຈອນປິດ ແລະ ເຄື່ອງບັນທຶກເຫດການ ລວມທັງລະບົບປ້ອງກັນອັກຄີໄພ ເພື່ອເກັບຮັກສາສິນຄ້າ ຕະຫຼອດເວລາ;

2. ຈັດວາງ ແລະ ເກັບຮັກສາສິນຄ້າ ໂດຍແຍກປະເພດສິນຄ້າ ທີ່ນຳເຂົ້າຈາກຕ່າງປະເທດ ແລະ ສິນຄ້າພາຍໃນປະເທດ ບໍ່ໃຫ້ເກັບຮັກສາສິນຄ້າປົນກັນ ໂດຍໃຫ້ຖືກຕ້ອງກັບຄຸນລັກສະນະຂອງສິນຄ້າ;

3. ຈັດວາງສິນຄ້າ ໃຫ້ເປັນລະບຽບ ຕາມລະຫັດຂອງສິນຄ້າ ແລະ ໃຫ້ມີທາງຍ່າງສະດວກ ລວມທັງການກວດ ແລະ ກວດນັບຈຳນວນສິນຄ້າ ທີ່ຍັງເຫຼືອ.

ສະຖານທີ່ເກັບຮັກສາສິນຄ້າ ໃຫ້ນຳໃຊ້ລະບົບເອເລັກໂຕຣນິກ ທີ່ເຊື່ອມຕໍ່ກັບລັດຖະການພາສີ ໃນການກວດກາສິນຄ້າເຂົ້າ-ອອກຈາກເຂດປອດພາສີ ແລະ ການເອົາສິນຄ້າ ຂຶ້ນ ລົງ ທີ່ບັນຈຸແບບພາເລັດ (Palletized Cargo) ແລະ/ຫຼື ຕູ້ບັນຈຸສິນຄ້າ (Containerized Cargo).

## ໝວດທີ 5
## ການກວດກາ ແລະ ການຄວບຄຸມເຂດປອດພາສີ

**ມາດຕາ 46 ການຄວບຄຸມການເຄື່ອນຍ້າຍສິນຄ້າ ລະຫວ່າງດ່ານພາສີຊາຍແດນ ແລະ ເຂດປອດພາສີ**

ການເຄື່ອນຍ້າຍສິນຄ້າຈາກດ່ານພາສີຊາຍແດນໃດໜຶ່ງ ເຂົ້າໄປເຂດປອດພາສີ ຫຼື ສົ່ງອອກຈາກເຂດປອດພາສີ ໄປຫາດ່ານພາສີຊາຍແດນບ່ອນສົ່ງອອກ ໃຫ້ເຄື່ອນຍ້າຍສິນຄ້າ ຕາມເສັ້ນທາງ ທີ່ກຳນົດໃນສັນຍາວ່າດ້ວຍການຂົນສົ່ງທາງບົກ ສອງຝ່າຍ ຫຼື ຫຼາຍຝ່າຍ ທີ່ ສປປ ລາວ ເປັນພາຄີ ແລະ/ຫຼື ເສັ້ນທາງ ທີ່ລັດຖະການພາສີກຳນົດ ໂດຍນຳໃຊ້ຮູບແບບການຂົນສົ່ງ ທີ່ເໝາະສົມກັບປະເພດ ແລະ ຊະນິດຂອງສິນຄ້າ ດ້ວຍການໜີບກົ່ວ ຫຼື ສາຍຮັດເອເລັກໂຕຣນິກ. ຖ້າຫາກຍານພາຫະນະ ທີ່ນຳໃຊ້ໃນການຂົນສົ່ງສິນຄ້າ ເປ່ເພ ແລະ ມີຄວາມຈຳເປັນຕ້ອງປ່ຽນຍານພາຫະນະ ຜູ້ຂົນສົ່ງ ຕ້ອງແຈ້ງເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ຫຼື ຫ້ອງການພາສີບ່ອນທີ່ໃກ້ສຸດ ໂດຍທັນທີ.

**ມາດຕາ 47 ການສະຫຼຸບບັນຊີສິນຄ້າໃນລະບົບສາງປະຈຳປີ**

ການສະຫຼຸບບັນຊີສິນຄ້າໃນລະບົບສາງປະຈຳປີ ໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີ ປະຕິບັດດັ່ງນີ້:

1. ສົ່ງບົດສະຫຼຸບບັນຊີສິນຄ້າປະຈຳປີ ໃຫ້ລັດຖະການພາສີ ພາຍໃນກຳນົດເວລາ ສິບຫ້າວັນ ກ່ອນວັນປິດສະຫຼຸບບັນຊີສິນຄ້າ ໃນລະບົບສາງປະຈຳປີ;

2. ໃນລະຫວ່າງການສະຫຼຸບບັນຊີສິນຄ້າປະຈຳປີ ສິນຄ້າທີ່ເຄື່ອນຍ້າຍອອກຈາກເຂດປອດພາສີ ເພື່ອຈຸດປະສົງ ປຸງແຕ່ງ, ສ້ອມແປງ, ກວດກາ, ທົດສອບ ແລະ ວາງສະແດງ ທີ່ໄດ້ຮັບອະນຸຍາດຈາກລັດຖະການພາສີນັ້ນຕ້ອງໄດ້ນຳກັບຄືນມາເຂດປອດພາສີ ຢ່າງຄົບຖ້ວນ. ໃນກໍລະນີບໍ່ສາມາດນຳກັບຄືນດ້ວຍເຫດຜົນໃດໜຶ່ງ ຕ້ອງສະເໜີຂໍອະນຸຍາດຈາກເຈົ້າໜ້າທີ່ພາສີ ເພື່ອດຳເນີນການສະຫຼຸບບັນຊີສິນຄ້າປະຈຳປີ ຢູ່ນອກເຂດປອດພາສີດັ່ງກ່າວ ໃນໄລຍະເວລາດຽວກັນ;

3. ພາຍຫຼັງສະຫຼຸບບັນຊີສິນຄ້າຄ້າງສາງປະຈຳປີ ຜູ້ລົງທຶນກິດຈະການໃນເຂດປອດພາສີ ຕ້ອງໄດ້ກະກຽມໃບລາຍການສິນຄ້າຄ້າງສາງ (Inventory Lists) ແລະ ໃບລາຍງານການກວດນັບສິນຄ້າໃນສາງທ້າຍປີ

(Final Settlement Statement) ຂອງສິນຄ້າ ທີ່ຈຳໜ່າຍພາຍໃນ ຫຼື ຢູ່ນອກເຂດປອດພາສີດັ່ງກ່າວ ຈຳນວນສອງຊຸດ. ລາຍການສິນຄ້າໃນສາງ ຕ້ອງສົ່ງໃຫ້ເຈົ້າໜ້າທີ່ພາສີ ເພື່ອກວດກາໃນຕໍ່ໜ້າ ພາຍໃນກຳນົດເວລາ ໜຶ່ງເດືອນ ນັບຈາກວັນສະຫຼຸບຜົນການກວດກາ. ຜູ້ລົງທຶນກິດຈະການໃນເຂດປອດພາສີ ສາມາດສະເໜີຕໍ່ກຳນົດເວລາໄດ້ ບໍ່ເກີນ ສາມສິບວັນ, ແຕ່ຕ້ອງສະເໜີຕໍ່ເຈົ້າໜ້າທີ່ພາສີ ກ່ອນວັນໝົດກຳນົດ;

4. ໃນກໍລະນີຂາດຫາຍ ຫຼື ເພີ່ມເຕີມສິນຄ້າໃນລະບົບສາງ ລະຫວ່າງຂະບວນການກວດກາສິນຄ້າໃນສາງປະຈຳປີ ໃຫ້ປະຕິບັດຕາມມາດຕາ 42 ຂອງດຳລັດສະບັບນີ້.

**ມາດຕາ 48 ການກວດກາບັນຊີສິນຄ້າໃນລະບົບສາງ**

ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ຫຼື ເຈົ້າໜ້າທີ່ພາສີ ທີ່ຖືກແຕ່ງຕັ້ງຈາກກົມພາສີ ໃຫ້ດຳເນີນການກວດກາບັນຊີສິນຄ້າໃນລະບົບສາງ ດັ່ງນີ້:

1. ກວດກາການກະກຽມ ແລະ ປິດລາຍງານບັນຊີສິນຄ້າປະຈຳປີ ຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ ໃນຮູບແບບເອເລັກໂຕຣນິກ ແລະ/ຫຼື ຕາມແບບພິມ ທີ່ກຳນົດໄວ້. ໃນກໍລະນີຜູ້ລົງທຶນກິດຈະການໃນເຂດປອດພາສີ ບໍ່ໄດ້ກະກຽມ ແລະ ບໍ່ສົ່ງປິດສະຫຼຸບບັນຊີສິນຄ້າປະຈຳປີ ໃຫ້ລັດຖະການພາສີ ພາຍໃນກຳນົດເວລາທີ່ກຳນົດໄວ້ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ເລັ່ງທວງ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນຄົບກຳນົດສົ່ງປິດສະຫຼຸບບັນຊີປະຈຳປີ. ຖ້າຫາກຜູ້ລົງທຶນກິດຈະການເຂດປອດພາສີ ບໍ່ສະໜອງຂໍ້ມູນ ແລະ/ຫຼື ເມີນເສີຍ ພາຍໃນກຳນົດເວລາດັ່ງກ່າວ ໃຫ້ຖືວ່າເປັນການລະເມີດລະບຽບການທາງພາສີ.

2. ເຈົ້າໜ້າທີ່ພາສີ ຕ້ອງກະກຽມແຜນການກວດກາປະຈຳປີ ໂດຍກຳນົດເປົ້າໝາຍຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ ໃນການກວດກາບັນຊີສິນຄ້າໃນລະບົບສາງ:

2.1 ກ່ອນດຳເນີນການກວດກາ ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ຫຼື ເຈົ້າໜ້າທີ່ພາສີ ທີ່ຖືກແຕ່ງຕັ້ງຈາກກົມພາສີ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີ ຮັບຮູ້ລ່ວງໜ້າ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ເພື່ອກະກຽມບັນດາເອກະສານ ແລະ ຂໍ້ມູນ ກ່ຽວກັບການເຄື່ອນໄຫວລະບົບຄຸ້ມຄອງສິນຄ້າພາຍໃນສາງ. ໃນກໍລະນີຜູ້ລົງທຶນກິດຈະການໃນເຂດປອດພາສີ ບໍ່ສາມາດຮັບເອົາການສະເໜີການລົງກວດກາ ຕາມວັນ ແລະ ເວລາຂອງຄະນະກວດກາ ຕ້ອງແຈ້ງຕອບດ້ວຍເຫດຜົນ ພາຍໃນກຳນົດເວລາ ສາມວັນ ລັດຖະການ. ການດຳເນີນການກວດກາ ຕ້ອງໃຫ້ສຳເລັດ ແລະ ສະຫຼຸບຜົນການກວດກາ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ, ຖ້າຫາກບໍ່ສຳເລັດພາຍໃນກຳນົດເວລາດັ່ງກ່າວ ກໍສາມາດຕໍ່ກຳນົດເວລາໄດ້ ບໍ່ເກີນ ຫ້າວັນ ລັດຖະການ, ການກວດກາສິນຄ້າທີ່ຄ້າງສາງປະຈຳປີ ໃຫ້ດຳເນີນ ຢ່າງໜ້ອຍ ປີລະໜຶ່ງຄັ້ງ;

2.2 ການກວດກາລະບົບບັນຊີຄຸ້ມຄອງສາງ (Inventory Control Systems) ຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ ໃຫ້ປະຕິບັດ ດັ່ງນີ້:

2.2.1 ກວດກາການເກັບຮັກສາ, ຈັດວາງສິນຄ້າໃນລະບົບສາງ ວ່າມີບ່ອນເກັບມ້ຽນທີ່ເໝາະສົມ, ມີຄວາມປອດໄພ ແລະ ກ້ອງວົງຈອນປິດ ຫຼື ອຸປະກອນອື່ນ ທີ່ມີຄວາມພ້ອມໃນການໃຊ້ງານ ລວມທັງລະບົບການກວດນັບສິນຄ້າ ຢ່າງເປັນປົກກະຕິ;

2.2.2 ກວດກາໂປຣແກຣມທີ່ໃຊ້ຄຸ້ມຄອງສາງ ສາມາດບັນທຶກຂໍ້ມູນ ແລະ ປະເມີນຜົນດ້ານປະລິມານ ໃນເວລາສິນຄ້າມີການເຄື່ອນໄຫວຂອງລາຍການສິນຄ້າ ຕັ້ງແຕ່ມີການນຳເຂົ້າມາເກັບຮັກສາ, ການສົ່ງອອກ ແລະ ປະລິມານສິນຄ້າທີ່ຍັງເຫຼືອ ວ່າຖືກຕ້ອງຕາມຕົວຈິງ ຫຼື ບໍ່.

2.3 ການກວດນັບສິນຄ້າທີ່ຍັງເຫຼືອ ໃຫ້ປະຕິບັດ ດັ່ງນີ້:

2.3.1 ໃຫ້ເຈົ້າໜ້າທີ່ພາສີ ນຳໃຊ້ຫຼັກການບໍລິຫານຄວາມສ່ຽງ ເພື່ອກວດກາຂໍ້ມູນສິນຄ້າ ໂດຍການສຸ່ມກວດ ຢ່າງໜ້ອຍ ສິບລາຍການ ເຊັ່ນ ວັດຖຸດິບທີ່ນຳໃຊ້ໃນການຜະລິດ, ລາຍການສິນຄ້າທີ່ມີອັດຕາພາສີສູງ, ສິນຄ້າທີ່ມີຄຸນຄ່າສູງ, ລາຍການສິນຄ້າທີ່ມີຄວາມສ່ຽງອື່ນ ແລະ ກວດນັບຈຳນວນສິນຄ້າທີ່ຍັງເຫຼືອແຕ່ລະອັນທີ່ຍັງມີຕົວຈິງ ໂດຍປຽບທຽບກັບປະລິມານສິນຄ້າທີ່ຍັງເຫຼືອ ໃນບົດລາຍງານບັນຊີລາຍການເຄື່ອນໄຫວຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ;

2.3.2 ກວດກາປະລິມານຂອງສິນຄ້າແຕ່ລະຊະນິດ ທີ່ໄດ້ສຸ່ມກວດ ຕັ້ງແຕ່ມີການນຳເຂົ້າ-ສົ່ງອອກ ແລະ ຈຳນວນສິນຄ້າທີ່ຍັງເຫຼືອ ໃນລະບົບຄຸ້ມຄອງສາງຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ ມາປຽບທຽບກັບຂໍ້ມູນ ໃນລະບົບເອເລັກໂຕຣນິກຂອງລັດຖະການພາສີ ແລະ ປະລິມານສິນຄ້າທີ່ຍັງເຫຼືອ ໄດ້ມີການກວດນັບສິນຄ້າຕົວຈິງ ວ່າຖືກຕ້ອງກົງກັນ ຫຼື ບໍ່, ຖ້າຫາກກວດພົບມີຈຳນວນທີ່ຍັງເຫຼືອ ແຕກຕ່າງຈາກຂໍ້ມູນໃນລະບົບຂອງລັດຖະການພາສີ ໃຫ້ປະຕິບັດ ດັ່ງນີ້:

- ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ຫຼື ເຈົ້າໜ້າທີ່ພາສີ ທີ່ຖືກແຕ່ງຕັ້ງຈາກກົມພາສີ ແຈ້ງໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີ ຮັບຮູ້ ກ່ຽວກັບຈຳນວນຂອງລາຍການສິນຄ້າ ທີ່ຂາດ ຫຼື ເກີນຈາກຂໍ້ມູນ ໃນລະບົບຂອງລັດຖະການພາສີ;
- ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ເຮັດຈົດໝາຍບັນທຶກການລະເມີດລະບຽບການທາງພາສີ ພ້ອມທັງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ລົງທຶນກິດຈະການໃນເຂດປອດພາສີ ມາຊຳລະຄ່າພາສີ ແລະ ພັນທະອື່ນ ຕາມກົດໝາຍ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ.

3. ການກຳນົດຄ່າຄວາມສ່ຽງຂອງຜູ້ລົງທຶນກິດຈະການໃນເຂດປອດພາສີ ໃຫ້ນຳໃຊ້ຫຼັກການຂອງການຄຸ້ມຄອງການປະເມີນຄວາມສ່ຽງ ຕາມເງື່ອນໄຂລະບົບການຄຸ້ມຄອງສາງ, ຄວາມໜ້າເຊື່ອຖືທາງດ້ານການເງິນ ແລະ ການປະຕິບັດຕາມກົດໝາຍ, ລະບຽບການ ແລະ ສັນຍາຄ້ຳປະກັນ. ຜູ້ລົງທຶນກິດຈະການໃນເຂດປອດພາສີ ທີ່ປະຕິບັດເງື່ອນໄຂໄດ້ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຈະໄດ້ຮັບການອຳນວຍຄວາມສະດວກ ແລະ ສາມາດເຂົ້າຮ່ວມແຜນງານຜູ້ປະກອບການມາດຕະຖານເອອີໂອ ແລະ ຈະໄດ້ຮັບນະໂຍບາຍ ຫຼື ສິດຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ເຂດປອດພາສີສຳລັບກິດຈະການ
## ປະເພດນ້ຳມັນດິບ, ສານເຄມີ ຫຼື ນ້ຳມັນສຳເລັດຮູບ

### ມາດຕາ 49 ເຂດປອດພາສີສຳລັບກິດຈະການປະເພດນ້ຳມັນດິບ ແລະ ສານເຄມີ

ນ້ຳມັນດິບ ແລະ ສານເຄມີ ເປັນວັດຖຸດິບທີ່ນຳມາຜະລິດ ເປັນນ້ຳມັນກາຊວນ, ນ້ຳມັນແອັດຊັງ, ອາຍແກັສ, ນ້ຳມັນກາດບິນ, ນ້ຳມັນເຕົາ, ນ້ຳມັນຫຼໍ່ລື່ນ ແລະ ຜະລິດຕະພັນນ້ຳມັນອື່ນ ທີ່ນຳໃຊ້ ຫຼື ອາດນຳໃຊ້ ເປັນເຊື້ອໄຟ ຫຼື ເປັນສິ່ງຫຼໍ່ລື່ນ.

ເຂດປອດພາສີສຳລັບກິດຈະການປະເພດນ້ຳມັນດິບ ແລະ ສານເຄມີ ແມ່ນ ເຂດປອດພາສີສຳລັບການດຳເນີນກິດຈະການດ້ານອຸດສາຫະກຳ ແລະ/ຫຼື ການຄ້າ ກ່ຽວກັບນ້ຳມັນດິບ ແລະ ສານເຄມີ ຊຶ່ງສິນຄ້າທີ່ນຳເຂົ້າໃນເຂດປອດພາສີດັ່ງກ່າວ ຈະໄດ້ຮັບນະໂຍບາຍ ຫຼື ສິດຜົນປະໂຫຍດດ້ານພາສີ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 50 ການຄິດໄລ່ປະລິມານ ແລະ ນ້ຳໜັກ**

ການຄິດໄລ່ປະລິມານ ແລະ ນ້ຳໜັກ ເພື່ອເປັນພື້ນຖານໃນການຈັດເກັບຄ່າພາສີ ແລະ ພັນທະອື່ນ ສຳລັບນ້ຳມັນດິບ ຫຼື ສານເຄມີ ທີ່ນຳມາຜະລິດ ຫຼື ປຸງແຕ່ງຢູ່ໃນຖັງເກັບມ້ຽນ ລວມທັງຜະລິດຕະພັນນ້ຳມັນ ເມື່ອຖືກສົ່ງອອກຈາກເຂດປອດພາສີ ເພື່ອຈຳໜ່າຍພາຍໃນ ຫຼື ສົ່ງອອກໄປຕ່າງປະເທດ ໃຫ້ນຳໃຊ້ຫຼັກການວິທີຄິດໄລ່ຕາມມາດຕະຖານສາກົນ ໃນອຸນຫະພູມ ລະດັບ 30˚C (Celsius) ຫຼື 86˚F (Fahrenheit).

**ມາດຕາ 51 ການນຳເອົານ້ຳມັນດິບ ຫຼື ສານເຄມີ ເຂົ້າໄປເກັບຮັກສາ ຫຼື ດຳເນີນການອື່ນຂອງໂຮງກັ່ນ ຫຼື ໂຮງງານປຸງແຕ່ງໃນເຂດປອດພາສີ**

ການນຳເອົານ້ຳມັນດິບ ຫຼື ສານເຄມີເຂົ້າໄປເກັບຮັກສາ ຫຼື ດຳເນີນການອື່ນຂອງໂຮງກັ່ນ ຫຼື ໂຮງງານປຸງແຕ່ງໃນເຂດປອດພາສີ ໃຫ້ດຳເນີນດ້ວຍການສູບຖ່າຍຜ່ານທໍ່ສົ່ງ ທີ່ລະບຸໄວ້ເທົ່ານັ້ນ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ກ່ອນຈະອະນຸຍາດ ໃຫ້ມີການສູບຖ່າຍນ້ຳມັນດິບ ຫຼື ສານເຄມີ ທີ່ເກັບໄວ້ໃນຖັງ ຫຼື ດຳເນີນການປະສົມນັ້ນ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ກວດກາໃບແຈ້ງພາສີເປັນລາຍລະອຽດຈາກດ່ານພາສີຊາຍແດນຕົ້ນທາງ, ເອກະສານການເຄື່ອນຍ້າຍ, ລະບົບຄວາມປອດໄພ ແລະ ສະພາບຂອງພາຫະນະຂົນສົ່ງເປັນຕົ້ນ ການໜີບກົ່ວ ຫຼື ສາຍຮັດເອເລັກໂຕຣນິກ, ຖ້າຫາກຢູ່ໃນສະພາບປົກກະຕິ ຈຶ່ງອະນຸຍາດ ໃຫ້ມີການສູບຖ່າຍໄດ້;

2. ໃນການສູບຖ່າຍນ້ຳມັນດິບ ຫຼື ສານເຄມີ ອອກຈາກພາຫະນະຂົນສົ່ງນັ້ນ ໃຫ້ຜູ້ລົງທຶນກິດຈະການໂຮງກັ່ນ ຫຼື ໂຮງງານປຸງແຕ່ງ ກວດກາຖັງເກັບນ້ຳມັນດິບ ຫຼື ຖັງເກັບສານເຄມີເສຍກ່ອນ ວ່າມີຜະລິດຕະພັນຍັງຄ້າງຢູ່ ຫຼື ເປັນນ້ຳມັນປະເພດໃດ ແລະ ມີປະລິມານເທົ່າໃດ. ພາຍຫຼັງສຳເລັດການສູບຖ່າຍແລ້ວ ໃຫ້ດຳເນີນການວັດແທກດ້ວຍຕົນເອງ ແລະ ສົ່ງເອກະສານລາຍງານ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີພາຍໃນກຳນົດເວລາ ສອງວັນ ລັດຖະການ. ໃນກໍລະນີມີຂໍ້ສົງໄສ ຫຼື ມີຂໍ້ມູນ ກ່ຽວກັບປະເພດ ຫຼື ປະລິມານຂອງນ້ຳມັນດິບ ຫຼື ສານເຄມີ ບໍ່ສອດຄ່ອງກັບເອກະສານທີ່ແຈ້ງນັ້ນ ໃຫ້ເຈົ້າໜ້າທີ່ພາສີນັ້ນ ດຳເນີນການສຸ່ມກວດໄດ້ ຕາມລະບຽບການ;

3. ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ກວດກາເອກະສານ ໃນການຄິດໄລ່ປະລິມານການບັນຈຸນ້ຳມັນ ໃນຖັງເກັບນ້ຳມັນດິບ ໃນອຸນຫະພູມ ລະດັບ 30˚C (Celsius) ຫຼື 86˚F (Fahrenheit) ໂດຍປຽບທຽບກັບຜົນໄດ້ຮັບ ຖ້າຫາກປະລິມານມີການຜິດດ່ຽງ ບໍ່ເກີນ ສອງສ່ວນຮ້ອຍ (2%) ຈະບໍ່ຖືວ່າເປັນການລະເມີດລະບຽບການທາງພາສີ ແລະ ບັນທຶກຜົນການກວດປ່ອຍ ຕາມລະບຽບການ.

ການນຳເຂົ້ານ້ຳມັນດິບ ຫຼື ສານເຄມີ ເພື່ອມາເກັບຮັກສາ ຫຼື ດຳເນີນການອື່ນ ໃນໂຮງກັ່ນ ຫຼື ໂຮງງານປຸງແຕ່ງ ໃນເຂດປອດພາສີ ຕ້ອງແຈ້ງພາສີເປັນລາຍລະອຽດ ໃນລະບອບງົດເກັບພາສີ ແລະ ພັນທະອື່ນ ຕາມລະບຽບການ.

**ມາດຕາ 52 ການກວດກາຄຸນນະພາບນ້ຳມັນເຊື້ອໄຟ**

ນ້ຳມັນເຊື້ອໄຟ ທີ່ໄດ້ຈາກການຜະລິດ, ປຸງແຕ່ງ, ກັ່ນຕອງ, ບັນຈຸ ຫຼື ດຳເນີນການອື່ນ ກ່ອນຈຳໜ່າຍພາຍໃນປະເທດ ຕ້ອງຜ່ານການກວດກາຄຸນນະພາບນ້ຳມັນເຊື້ອໄຟ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 53 ການນໍາເອົານໍ້າມັນເຊື້ອໄຟອອກຈາກໂຮງກັ່ນ, ໂຮງງານປຸງແຕ່ງ ຫຼື ຄັງເກັບຮັກສາ ເພື່ອຈໍາໜ່າຍພາຍໃນປະເທດ**

ໃນການນໍາເອົານໍ້າມັນເຊື້ອໄຟອອກຈາກໂຮງກັ່ນ, ໂຮງງານປຸງແຕ່ງ ຫຼື ຄັງເກັບຮັກສາ ໃນເຂດປອດພາສີ ເພື່ອຈໍາໜ່າຍພາຍໃນປະເທດ ຜູ້ລົງທຶນກິດຈະການ ຕ້ອງປະຕິບັດຕາມລະບຽບການທາງພາສີ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ສໍາເລັດເສຍກ່ອນ ຈຶ່ງສາມາດນໍາເອົານໍ້າມັນເຊື້ອໄຟ ອອກຈໍາໜ່າຍໄດ້ ແລະ ຈໍາໜ່າຍ ໃຫ້ແກ່ຜູ້ດໍາເນີນທຸລະກິດນໍ້າມັນເຊື້ອໄຟ ຕາມລະບຽບການ.

**ມາດຕາ 54 ການນໍາເອົານໍ້າມັນເຊື້ອໄຟອອກຈາກໂຮງກັ່ນ, ໂຮງງານປຸງແຕ່ງ ຫຼື ຄັງເກັບຮັກສາ ເພື່ອສົ່ງອອກຕ່າງປະເທດ**

ການນໍາເອົານໍ້າມັນເຊື້ອໄຟອອກຈາກໂຮງກັ່ນ, ໂຮງງານປຸງແຕ່ງ ຫຼື ຄັງເກັບຮັກສາ ໃນເຂດປອດພາສີ ເພື່ອສົ່ງອອກໄປຕ່າງປະເທດ ຈະໄດ້ຮັບການຍົກເວັ້ນພາສີຂາອອກ ຕາມກົດໝາຍ ແລະ ລະບຽບການ. ຜູ້ລົງທຶນກິດຈະການ ຕ້ອງປະຕິບັດຕາມລະບຽບການທາງພາສີ ໃຫ້ສໍາເລັດເສຍກ່ອນ ຈຶ່ງໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບນັ້ນ ກວດປ່ອຍນໍ້າມັນເຊື້ອໄຟ ຕາມລະບຽບການ.

**ມາດຕາ 55 ການຄວບຄຸມ ແລະ ກວດກາລະບົບບັນຊີຂອງໂຮງກັ່ນ ຫຼື ໂຮງງານປຸງແຕ່ງ**

ຜູ້ລົງທຶນກິດຈະການ ໂຮງກັ່ນ ຫຼື ໂຮງງານປຸງແຕ່ງ ຕ້ອງສະແດງຫຼັກຖານການຄວບຄຸມ ແລະ ການເຄື່ອນໄຫວໃນລະບົບບັນຊີ ເຊັ່ນ ລາຍການທີ່ນໍາເຂົ້າ, ການສົ່ງອອກ, ການຮັບໂອນ, ການເຄື່ອນຍ້າຍ, ການຊໍາລະຄ່າພາສີ ແລະ ພັນທະອື່ນ ແລະ ລາຍລະອຽດຂອງຈໍານວນສິນຄ້າທີ່ຍັງເຫຼືອ ເປັນສອງໄລຍະ ໂດຍໃຫ້ຖືເອົາ ວັນທີ 30 ມິຖຸນາ ແລະ 31 ທັນວາ ຂອງທຸກປີ ເປັນວັນສະຫຼຸບບັນຊີ ພ້ອມທັງໃຫ້ຜູ້ລົງທຶນກິດຈະການໂຮງກັ່ນກວດນັບສິນຄ້າທີ່ຍັງເຫຼືອ ແຕ່ລະໄລຍະ ແລ້ວສົ່ງບົດລາຍງານດັ່ງກ່າວ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບ ໂຮງກັ່ນ ຫຼື ໂຮງງານປຸງແຕ່ງ ເພື່ອກວດກາຄືນ ຕາມລະບຽບການ.

ຖ້າຫາກຜົນການກວດກາບັນຊີ ນໍ້າມັນເຊື້ອໄຟ ຫຼື ສານເຄມີ ທີ່ເກັບຮັກສາໄວ້ ໃນໂຮງກັ່ນ ຫຼື ໂຮງງານປຸງແຕ່ງ ມີຈໍານວນເກີນ ຫຼື ຫຼຸດຈາກບັນຊີ ໃຫ້ພິຈາລະນາ ດັ່ງນີ້:

1. ໃນກໍລະນີກວດເຫັນສ່ວນຜິດດ່ຽງ ໃນອັດຕາ ບໍ່ເກີນ ຫຼື ບໍ່ຫຼຸດ ສູນຈຸດຫ້າສ່ວນຮ້ອຍ ຂອງຈໍານວນທີ່ເກັບຮັກສາໄວ້ ຈະບໍ່ຖືວ່າເປັນການລະເມີດລະບຽບການທາງພາສີ ແລະ ໃຫ້ເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບເຂດປອດພາສີ ປັບຍອດບັນຊີໃຫ້ຖືກຕ້ອງ ຕາມຈໍານວນທີ່ກວດກາພົບເຫັນຕົວຈິງ ຕາມແຕ່ລະໄລຍະ;
2. ໃນກໍລະນີກວດເຫັນສ່ວນຜິດດ່ຽງ ໃນອັດຕາ ເກີນ ຫຼື ຫຼຸດ ສູນຈຸດຫ້າສ່ວນຮ້ອຍ ຂອງຈໍານວນທີ່ເກັບຮັກສາໄວ້ ຈະຖືວ່າເປັນການລະເມີດລະບຽບການທາງພາສີ, ຜູ້ລົງທຶນກິດຈະການ ໂຮງກັ່ນ ຫຼື ໂຮງງານປຸງແຕ່ງ ຕ້ອງແຈ້ງເສຍພາສີ ແລະ ພັນທະອື່ນ ຕາມຈໍານວນ ທີ່ເກີນ ຫຼື ຫຼຸດ ພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນເຮັດບົດບັນທຶກຜົນການກວດກາ ເປັນຕົ້ນໄປ.

## ໝວດທີ 7
## ທີ່ດິນຂອງເຂດປອດພາສີ

**ມາດຕາ 56 ການກໍານົດທີ່ດິນຂອງເຂດປອດພາສີ**

ພາຍຫຼັງໄດ້ຮັບຮອງບົດສຶກສາຄວາມເປັນໄປໄດ້ແລ້ວ ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການກໍານົດທີ່ດິນຂອງເຂດປອດພາສີ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ.

**ມາດຕາ 57 ການປັກຫຼັກເຂດປອດພາສີ**

ພາຍຫຼັງໄດ້ເຊັນສັນຍາພັດທະນາເຂດປອດພາສີແລ້ວ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາ ໃນການປັກຫຼັກເຂດປອດພາສີ ທີ່ໄດ້ຮັບການສຳປະທານ ຫຼື ສິດນຳໃຊ້ທີ່ດິນຂອງຕົນເອງ.

**ມາດຕາ 58 ການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ ໃຫ້ແກ່ຜູ້ພັດທະນາເຂດປອດພາສີ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 59 ການນຳໃຊ້ພື້ນທີ່ດິນ**

ຜູ້ພັດທະນາເຂດປອດພາສີ ສາມາດນຳໃຊ້ພື້ນທີ່ດິນ ເຂົ້າໃນເປົ້າໝາຍການດຳເນີນທຸລະກິດໂດຍກົງ ບໍ່ເກີນ ແປດສິບສ່ວນຮ້ອຍ ຂອງເນື້ອທີ່ດິນທັງໝົດ, ສ່ວນທີ່ເຫຼືອໃຫ້ພັດທະນາ ເປັນພື້ນທີ່ສາທາລະນະປະໂຫຍດ, ສວນສາທາລະນະ ແລະ ພື້ນທີ່ສີຂຽວ.

**ມາດຕາ 60 ການທົດແທນຄ່າເສຍຫາຍ ຫຼື ການຊົດເຊີຍທີ່ດິນ**

ລັດ ສາມາດໂອນເອົາສິດນຳໃຊ້ທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອກຳນົດເປັນພື້ນທີ່ດິນຂອງເຂດປອດພາສີ ແຕ່ຕ້ອງໃຫ້ທົດແທນຄ່າເສຍຫາຍ ຫຼື ຊົດເຊີຍທີ່ດິນ ໃຫ້ແກ່ຜູ້ເປັນເຈົ້າຂອງ ຢ່າງສົມເຫດສົມຜົນ ຫຼື ຕາມກົດໝາຍ ແລະ ລະບຽບການ.

## ພາກທີ IV
## ການຈັດຕັ້ງ ແລະ ການຄຸ້ມຄອງເຂດປອດພາສີ

**ມາດຕາ 61 ໜ່ວຍງານຂອງລັດທີ່ປະຈຳຢູ່ເຂດປອດພາສີ**

ໜ່ວຍງານຂອງລັດທີ່ປະຈຳຢູ່ເຂດປອດພາສີ ມີ ດັ່ງນີ້:

1. ໜ່ວຍງານພາສີ;
2. ໜ່ວຍງານອື່ນ ໃນກໍລະນີມີການສ້າງຕັ້ງ.

ໜ່ວຍງານດັ່ງກ່າວ ໄດ້ຮັບການສ້າງຕັ້ງ ແລະ ຍຸບເລີກ ໂດຍຂະແໜງການສາຍຕັ້ງຂອງຕົນ ເພື່ອນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ປະຈຳຢູ່ແຕ່ລະເຂດປອດພາສີ.

**ມາດຕາ 62 ສິດ ແລະ ໜ້າທີ່ຂອງໜ່ວຍງານພາສີ**

ໜ່ວຍງານພາສີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ ກວດກາການປະຕິບັດລະບຽບການທາງພາສີ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກ, ເກັບຮັກສາ ແລະ ເຄື່ອນຍ້າຍສິນຄ້າ ຜ່ານລະບົບເອເລັກໂຕຣນິກ ໃຫ້ວ່ອງໄວ ແລະ ຖືກຕ້ອງ ຕາມກົດໝາຍ;
2. ເກັບຄ່າພາສີ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນເຂດປອດພາສີ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
3. ກວດກາ ແລະ ສະກັດກັ້ນ ທຸກການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບພາສີ;

4. ເຂົ້າໄປໃນສະຖານທີ່ດຳເນີນກິດຈະການໃດໜຶ່ງ ໃນເຂດປອດພາສີ ເພື່ອກວດກາເອກະສານ ແລະ ຂໍ້ມູນ ກ່ຽວກັບສິນຄ້າ;

5. ກວດຄົ້ນ ໂຮງງານ, ອາຄານ ແລະ ພາຫະນະ ພາຍໃນເຂດປອດພາສີ ໂດຍບໍ່ຕ້ອງມີເອກະສານຂໍກວດຄົ້ນ ຈາກອົງການທີ່ມີສິດອຳນາດ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃນເຂດປອດພາສີ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 63 ສິດ ແລະ ໜ້າທີ່ຂອງໜ່ວຍງານອື່ນ**

ໃນກໍລະນີແຕ່ງຕັ້ງໜ່ວຍງານອື່ນ ປະຈຳຢູ່ເຂດປອດພາສີ ໃຫ້ໜ່ວຍງານນັ້ນ ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມພາລະບົດບາດຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ V
## ຮ້ານຄ້າປອດພາສີ

**ມາດຕາ 64 ການສ້າງຕັ້ງຮ້ານຄ້າປອດພາສີ**

ຮ້ານຄ້າປອດພາສີ ສາມາດສ້າງຕັ້ງຂຶ້ນ ແລະ ໃຫ້ບໍລິການຈຳໜ່າຍ ສິນຄ້າ, ເຄື່ອງຂອງປອດພາສີ ຢູ່ດ່ານຊາຍແດນສາກົນ, ສະໜາມບິນສາກົນ, ທ່າເຮືອສາກົນ, ສະຖານີລົດໄຟ, ລົດໂດຍສານລະຫວ່າງປະເທດ ແລະ ໃນຕົວເມືອງ ຊຶ່ງອາດຈະແມ່ນ ສູນການຄ້າ, ແຫຼ່ງທ່ອງທ່ຽວ ຫຼື ເຂດທຸລະກິດອື່ນ.

**ມາດຕາ 65 ມາດຕະຖານ ແລະ ເງື່ອນໄຂຂອງຮ້ານຄ້າປອດພາສີ**

ຮ້ານຄ້າປອດພາສີ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີອາຄານ, ສະຖານທີ່ ທີ່ເໝາະສົມ ໃນການດຳເນີນກິດຈະການ ແລະ ຮັບຮອງດ້ານເຕັກນິກ ຈາກຂະແໜງການທີ່ກ່ຽວຂ້ອງ;

2. ມີຫ້ອງການ, ສາງເກັບມ້ຽນສິນຄ້າ ແລະ ຫ້ອງຂາຍ ທີ່ເໝາະສົມ, ມີຄວາມປອດໄພ ແລະ ໄດ້ມາດຕະຖານທາງດ້ານເຕັກນິກ;

3. ມີລະບົບບັນຊີ ທີ່ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ໃນການລົງບັນທຶກຂໍ້ມູນຕົວເລກການຄ້າຂອງຕົນ, ມີລະບົບເອເລັກໂຕຣນິກ ທີ່ສາມາດເຊື່ອມໂຍງກັບລະບົບຂອງລັດຖະການພາສີ ໃນການຄຸ້ມຄອງສິນຄ້າເຂົ້າ-ອອກສາງ, ການຂາຍ ແລະ ຂໍ້ມູນການເດີນທາງຂອງຜູ້ຊື້;

4. ມີລະບົບຮັກສາຄວາມປອດໄພ ທີ່ໄດ້ມາດຕະຖານ;

5. ມີປະລິມານຜູ້ໂດຍສານ ເດີນທາງເຂົ້າ-ອອກ ສະເລ່ຍ ຢ່າງໜ້ອຍ ໜຶ່ງແສນຄົນ ຕໍ່ປີ ສຳລັບດ່ານຊາຍແດນສາກົນ;

6. ມີຈຸດມອບ ຮັບສິນຄ້າຂອງຕົນ ຢູ່ດ່ານຊາຍແດນສາກົນ, ສະໜາມບິນສາກົນ, ທ່າເຮືອສາກົນ, ສະຖານີລົດໄຟຂາອອກ ຫຼື ລົດໂດຍສານລະຫວ່າງປະເທດ ເພື່ອຈັດສົ່ງສິນຄ້າປອດພາສີ ໃຫ້ລູກຄ້າທີ່ຊື້ສິນຄ້າ ຈາກຮ້ານຄ້າປອດພາສີ ສຳລັບຮ້ານຄ້າປອດພາສີໃນຕົວເມືອງ.

**ມາດຕາ 66 ການຂໍອະນຸຍາດດຳເນີນກິດຈະການຮ້ານຄ້າປອດພາສີ**

ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງ ແລະ ດຳເນີນກິດຈະການ ຮ້ານຄ້າປອດພາສີ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງການເງິນ ເພື່ອພິຈາລະນາອະນຸຍາດ ຕາມກົດໝາຍ ແລະ ລະບຽບການ.

ກະຊວງການເງິນ ເປັນຜູ້ອອກລະບຽບການ ກ່ຽວກັບການຄຸ້ມຄອງການດຳເນີນທຸລະກິດຮ້ານຄ້າປອດພາສີ.

**ມາດຕາ 67 ເງື່ອນໄຂຂອງຜູ້ຮ້ອງຂໍດຳເນີນກິດຈະການຮ້ານຄ້າປອດພາສີ**

ນິຕິບຸກຄົນ ທີ່ມີຈຸດປະສົງ ດຳເນີນກິດຈະການຮ້ານຄ້າປອດພາສີ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີປະຫວັດການດຳເນີນທຸລະກິດທີ່ດີ;
2. ມີທຶນຈົດທະບຽນ ແຕ່ ສິບຫ້າຕື້ກີບ ຂຶ້ນໄປ ແລະ ມີຖານະທາງດ້ານການເງິນ ທີ່ໝັ້ນຄົງ;
3. ບໍ່ເຄີຍຖືກສານຕັດສິນລົງໂທດຍ້ອນ ການກະທຳຜິດທາງພາສີ ຫຼື ການກະທຳຜິດທາງດ້ານເສດຖະກິດ ໂດຍເຈດຕະນາ.

**ມາດຕາ 68 ເອກະສານປະກອບ**

ເອກະສານປະກອບການ ຂໍອະນຸຍາດດຳເນີນກິດຈະການຮ້ານຄ້າປອດພາສີ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດສ້າງຕັ້ງ;
2. ໃບທະບຽນວິສາຫະກິດ;
3. ໃບຢັ້ງຢືນການມອບພັນທະສ່ວຍສາອາກອນ ຍົກເວັ້ນໃນກໍລະນີສ້າງຕັ້ງໃໝ່;
4. ໃບອະນຸຍາດປຸກສ້າງ ຫຼື ສັນຍາເຊົ່າ;
5. ໃບຢັ້ງຢືນການຖືບັນຊີ;
6. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຖ້າມີ;
7. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນທຸລະກິດ.

**ມາດຕາ 69 ການພິຈາລະນາການຂໍອະນຸຍາດດຳເນີນກິດຈະການຮ້ານຄ້າປອດພາສີ**

ກະຊວງການເງິນ ເປັນຜູ້ຄົ້ນຄວ້າ ໂດຍປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ພິຈາລະນາ ອະນຸຍາດດຳເນີນກິດຈະການຮ້ານຄ້າປອດພາສີ ພາຍໃນກຳນົດເວລາ ຫົກສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີປະຕິເສດ ການຂໍອະນຸຍາດດຳເນີນກິດຈະການຮ້ານຄ້າປອດພາສີ ກໍໃຫ້ແຈ້ງຜູ້ຮ້ອງຂໍ ພ້ອມດ້ວຍເຫດຜົນ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາດັ່ງກ່າວ.

**ມາດຕາ 70 ການຂໍອະນຸຍາດແຜນນຳເຂົ້າສິນຄ້າປະຈຳປີ**

ການຂໍອະນຸຍາດແຜນນຳເຂົ້າສິນຄ້າປະຈຳປີ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ໃນກໍລະນີຜູ້ດຳເນີນກິດຈະການຮ້ານຄ້າປອດພາສີໃໝ່ ຕ້ອງສ້າງແຜນນຳເຂົ້າສິນຄ້າປະຈຳປີ ຢ່າງລະອຽດ ກ່ຽວກັບສິນຄ້າ ແຕ່ລະຊະນິດ, ຈຳນວນ, ມູນຄ່າ, ປະເທດແຫຼ່ງກຳເນີດ, ວັນໝົດອາຍຸ ຂອງການນຳໃຊ້ສິນຄ້າ ຕ້ອງຫຼາຍກວ່າ ໜຶ່ງປີ ເພື່ອຍື່ນຕໍ່ກົມພາສີ;

2. ສໍາລັບຜູ້ດໍາເນີນກິດຈະການຮ້ານຄ້າປອດພາສີມາກ່ອນແລ້ວ ຖ້າມີການນໍາເຂົ້າສິນຄ້າ ໃນປີຖັດໄປ ຕ້ອງໄດ້ສະຫຼຸບຄືນ ກ່ຽວກັບການດໍາເນີນກິດຈະການຮ້ານຄ້າປອດພາສີ ໃນໄລຍະຜ່ານມາ ເປັນຕົ້ນ ບັນຊີສາງ, ບັນຊີການຂາຍ, ບັນຊີການນໍາໃຊ້ສະແຕັມປອດພາສີ, ການມອບພັນທະ ໂດຍມີການຢັ້ງຢືນຈາກລັດຖະການພາສີ ແລະ ຂະແໜງການທີ່ກ່ຽວຂ້ອງ. ນອກຈາກນັ້ນ ຕ້ອງສ້າງແຜນນໍາເຂົ້າສິນຄ້າປະຈໍາປີ ຢ່າງລະອຽດ ກ່ຽວກັບສິນຄ້າ ແຕ່ລະຊະນິດ, ຈໍານວນ, ມູນຄ່າ, ປະເທດແຫຼ່ງກໍາເນີດ, ວັນໝົດອາຍຸ ຂອງການນໍາໃຊ້ສິນຄ້າ ຕ້ອງຫຼາຍກວ່າ ໜຶ່ງປີ ເພື່ອຍື່ນຕໍ່ກົມພາສີ;

3. ພາຍຫຼັງໄດ້ຮັບແຜນນໍາເຂົ້າສິນຄ້າປະຈໍາປີແລ້ວ ກົມພາສີ ຕ້ອງກວດກາເອກະສານທີ່ກ່ຽວຂ້ອງ ພາຍໃນກໍານົດເວລາ ສິບຫ້າວັນ ຖ້າເຫັນວ່າ ຖືກຕ້ອງ ແລະ ຄົບຖ້ວນແລ້ວ ໃຫ້ນໍາສະເໜີກະຊວງການເງິນ ພິຈາລະນາຕົກລົງ, ແຕ່ຖ້າເຫັນວ່າ ບໍ່ຖືກຕ້ອງ ແລະ ຍັງບໍ່ທັນຄົບຖ້ວນ ໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ສະເໜີ ພາຍໃນກໍານົດເວລາ ຫ້າວັນ ລັດຖະການ.

**ມາດຕາ 71 ສິດຂອງຜູ້ດໍາເນີນກິດຈະການຮ້ານຄ້າປອດພາສີ**

ຜູ້ດໍາເນີນກິດຈະການຮ້ານຄ້າປອດພາສີ ມີ ສິດ ດັ່ງນີ້:

1. ໄດ້ຮັບການສົ່ງເສີມ ແລະ ອໍານວຍຄວາມສະດວກຈາກລັດ ຕາມກົດໝາຍ;
2. ໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດຈາກການດໍາເນີນກິດຈະການ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ນໍາໃຊ້ທີ່ດິນ, ອາຄານ, ສິ່ງປຸກສ້າງ ແລະ ຊັບສິນບັດຄົງທີ່ອື່ນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ສັນຍາ;
4. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 72 ພັນທະຂອງຜູ້ດໍາເນີນກິດຈະການຮ້ານຄ້າປອດພາສີ**

ຜູ້ດໍາເນີນກິດຈະການຮ້ານຄ້າປອດພາສີ ມີ ພັນທະ ດັ່ງນີ້:

1. ດໍາເນີນກິດຈະການ ຕາມທີ່ໄດ້ຮັບອະນຸຍາດ ແລະ ຖືກຕ້ອງ ຕາມມາດຕະຖານ;
2. ເສຍພັນທະໃຫ້ລັດ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນກໍານົດເວລາ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
3. ຖືບັນຊີທີ່ຖືກຕ້ອງ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ຊໍາລະສະສາງຜ່ານລະບົບທະນາຄານ;
4. ຮັບປະກັນການຄຸ້ມຄອງສິນຄ້າ ໃນຮ້ານຄ້າປອດພາສີ ບໍ່ໃຫ້ຮົ່ວໄຫຼອອກສູ່ຕະຫຼາດພາຍໃນ;
5. ອໍານວຍຄວາມສະດວກ ດ້ານສະຖານທີ່, ອຸປະກອນຮັບໃຊ້ ສໍາລັບການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີ ທີ່ຮັບຜິດຊອບ ລວມທັງສະຖານທີ່ກວດກາສິນຄ້າປອດພາສີ;
6. ຮັບຜິດຊອບທາງແພ່ງ ແລະ/ຫຼື ທາງອາຍາ ຕໍ່ການລະເມີດກົດໝາຍ ແລະ ລະບຽບການ;
7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວກິດຈະການຂອງຕົນ ໃຫ້ເຈົ້າໜ້າທີ່ພາສີ ຢ່າງເປັນປົກກະຕິ;
8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ VI
## ການໂຈະ, ຖອນ ແລະ ອອກໃບອະນຸຍາດປ່ຽນແທນ

**ມາດຕາ 73 ການໂຈະການນຳໃຊ້ໃບອະນຸຍາດພັດທະນາ, ລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ**

ການໂຈະການນຳໃຊ້ໃບອະນຸຍາດພັດທະນາ, ລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ໃຫ້ປະຕິບັດ ດັ່ງນີ້:

1. ເມື່ອເຈົ້າໜ້າທີ່ພາສີ ກວດພົບເຫັນຜູ້ໄດ້ຮັບອະນຸຍາດ ບໍ່ປະຕິບັດຕາມສັນຍາຄ້ຳປະກັນ ຫຼື ເງື່ອນໄຂຂອງການອະນຸຍາດ, ກົດໝາຍວ່າດ້ວຍພາສີ, ດຳລັດສະບັບນີ້ ຫຼື ລະບຽບການທີ່ກ່ຽວຂ້ອງ ລັດຖະການພາສີ ຈະອອກແຈ້ງການເປັນລາຍລັກອັກສອນ ໃຫ້ປັບປຸງ ຫຼື ແກ້ໄຂ ໃຫ້ຖືກຕ້ອງ ພາຍໃນກຳນົດເວລາ ເກົ້າສິບວັນ;

2. ໃນກໍລະນີ ຜູ້ໄດ້ຮັບໃບອະນຸຍາດ ບໍ່ມີການປັບປຸງ ຫຼື ແກ້ໄຂ ພາຍໃນກຳນົດເວລາ ເກົ້າສິບວັນ ໃຫ້ລັດຖະການພາສີ ສະເໜີກະຊວງການເງິນ ພິຈາລະນາ ໂຈະໃບອະນຸຍາດລົງທຶນກິດຈະການ ຫຼື ຮ້ານຄ້າປອດພາສີ ພາຍໃນກຳນົດເວລາ ສາມສິບວັນ. ສຳລັບໃບອະນຸຍາດພັດທະນານັ້ນ ໃຫ້ກະຊວງການເງິນ ສະເໜີລັດຖະບານ ພິຈາລະນາ ໂຈະໃບອະນຸຍາດດັ່ງກ່າວ.

**ມາດຕາ 74 ການຖອນໃບອະນຸຍາດພັດທະນາ, ລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ**

ໃບອະນຸຍາດພັດທະນາ, ລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ຈະຖືກຖອນໃນກໍລະນີ ດັ່ງນີ້:

1. ບໍ່ດຳເນີນກິດຈະການ ພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດ ເປັນຕົ້ນໄປ ຫຼື ຢຸດເຊົາກິດຈະການ ຫຼາຍກວ່າ ໜຶ່ງຮ້ອຍແປດສິບວັນ ໂດຍບໍ່ແຈ້ງເປັນລາຍລັກອັກສອນ ໃຫ້ລັດຖະການພາສີ;

2. ຖືກໂຈະການນຳໃຊ້ໃບອະນຸຍາດມາແລ້ວ ສອງຄັ້ງ, ແຕ່ຍັງສືບຕໍ່ລະເມີດກົດໝາຍ ແລະ ລະບຽບການທາງພາສີ;

3. ໄດ້ລະເມີດ ຫຼື ບໍ່ປະຕິບັດ ຕາມຄຳສັ່ງໂຈະການນຳໃຊ້ໃບອະນຸຍາດ;

4. ບໍ່ເສຍຄ່າທຳນຽມປະຈຳປີ ຫຼື ບໍ່ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ພາຍຫຼັງມີການແຈ້ງເຕືອນ ຈາກກະຊວງການເງິນ.

ໃນກໍລະນີເຈົ້າໜ້າທີ່ພາສີ ຫາກພົບເຫັນການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫາ 4 ເທິງນີ້ ໃຫ້ລາຍງານກະຊວງການເງິນ ເພື່ອພິຈາລະນາອອກຄຳສັ່ງຖອນ ໃບອະນຸຍາດລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ. ສຳລັບໃບອະນຸຍາດພັດທະນານັ້ນ ໃຫ້ກະຊວງການເງິນ ສະເໜີລັດຖະບານ ເພື່ອພິຈາລະນາ ຖອນໃບອະນຸຍາດດັ່ງກ່າວ. ຄຳສັ່ງຖອນ ຕ້ອງແຈ້ງໃຫ້ຜູ້ໄດ້ຮັບໃບອະນຸຍາດ ຢ່າງເປັນລາຍລັກອັກສອນ. ສຳລັບນະໂຍບາຍ ຫຼື ສິດຜົນປະໂຫຍດ ສຳລັບສິນຄ້າໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີນັ້ນ ຈະສິ້ນສຸດລົງ ແລະ ສິນຄ້າດັ່ງກ່າວ ຕ້ອງນຳອອກຄືນ ຫຼື ເສຍພາສີ ແລະ ພັນທະອື່ນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສັ່ງຖອນໃບອະນຸຍາດ ຕາມກົດໝາຍວ່າດ້ວຍພາສີ ແລະ ດຳລັດສະບັບນີ້ ເປັນຕົ້ນໄປ.

ຜູ້ຖືກຖອນໃບອະນຸຍາດ ສາມາດເຮັດໜັງສືຊີ້ແຈງເຫດຜົນ ຕໍ່ກະຊວງການເງິນ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ອອກຄຳສັ່ງຖອນ ເປັນຕົ້ນໄປ. ພາຍຫຼັງໄດ້ຮັບໜັງສືຊີ້ແຈງແລ້ວ ກະຊວງການເງິນ ຈະ

ຄົ້ນຄວ້າ ພິຈາລະນາ ຕາມແຕ່ລະກໍລະນີ ແລະ ແຈ້ງຕອບເປັນລາຍລັກອັກສອນ ໃຫ້ແກ່ຜູ້ຖືກຖອນໃບອະນຸຍາດ ພາຍໃນກຳນົດເວລາ ສາມສິບວັນ.

**ມາດຕາ 75 ການອອກໃບອະນຸຍາດປ່ຽນແທນ**

ການອອກໃບອະນຸຍາດປ່ຽນແທນ ໃຫ້ປະຕິບັດ ດັ່ງນີ້:

1. ຖ້າຫາກໃບອະນຸຍາດ ພັດທະນາ, ລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ສູນຫາຍ ຫຼື ຖືກທຳລາຍ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ໃຫ້ຍື່ນຄຳຮ້ອງຂໍໃບອະນຸຍາດປ່ຽນແທນ ຕໍ່ກະຊວງການເງິນ ພ້ອມດ້ວຍເອກະສານ ແລະ ຫຼັກຖານຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສູນຫາຍ ຫຼື ຖືກທຳລາຍ ເປັນຕົ້ນໄປ;

2. ເມື່ອໄດ້ຮັບຄຳຮ້ອງຂໍ ພ້ອມດ້ວຍເອກະສານ ແລະ ຫຼັກຖານ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງການເງິນ ຈະພິຈາລະນາ ອອກໃບອະນຸຍາດປ່ຽນແທນ ໃບອະນຸຍາດລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ພາຍໃນກຳນົດເວລາ ສິບຫ້າວັນ. ສຳລັບໃບອະນຸຍາດພັດທະນານັ້ນ ໃຫ້ກະຊວງການເງິນ ສະເໜີລັດຖະບານ ພິຈາລະນາ ອອກໃບອະນຸຍາດປ່ຽນແທນ.

ໃບອະນຸຍາດປ່ຽນແທນ ພັດທະນາ, ລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ຕ້ອງມີເນື້ອໃນ ຄືກັນກັບ ໃບອະນຸຍາດສະບັບເດີມ ໂດຍມີຄຳວ່າ "ປ່ຽນແທນ" ເປັນຕົວອັກສອນສີແດງ ຢູ່ໃຈກາງຂອງໃບອະນຸຍາດ ແລະ ລະບຸ ວັນທີ, ເດືອນ, ປີ ທີ່ໄດ້ອອກໃບອະນຸຍາດປ່ຽນແທນ.

**ມາດຕາ 76 ການສະແດງໃບອະນຸຍາດ**

ຜູ້ໄດ້ຮັບໃບອະນຸຍາດພັດທະນາ, ລົງທຶນກິດຈະການໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ຕ້ອງສະແດງໃບອະນຸຍາດ ຫຼື ໃບອະນຸຍາດປ່ຽນແທນຂອງຕົນ ຢູ່ສຳນັກງານ ຫຼື ຫ້ອງການ ທີ່ສາມາດເປີດເຜີຍ ແລະ ເບິ່ງເຫັນໄດ້ງ່າຍ.

## ພາກທີ VII
## ຄ່າທຳນຽມ ແລະ ຄ່າບໍລິການ
## ໃນເຂດປອດພາສີ ແລະ ຮ້ານຄ້າປອດພາສີ

**ມາດຕາ 77 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກອະນຸຍາດ ກ່ຽວກັບການພັດທະນາເຂດປອດພາສີ, ລົງທຶນກິດຈະການໃນເຂດປອດພາສີ ແລະ ດຳເນີນກິດຈະການຮ້ານຄ້າປອດພາສີ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

ສຳລັບຄ່າທຳນຽມປະຈຳປີ ຂອງການດຳເນີນກິດຈະການຮ້ານຄ້າປອດພາສີ ໃຫ້ຈັດເກັບ ໜຶ່ງຮ້ອຍຫ້າສິບລ້ານກີບ ຕໍ່ປີ ຜ່ານທະນາຄານ ດ້ວຍລະບົບເອເລັກໂຕຣນິກ.

**ມາດຕາ 78 ການເກັບຄ່າທຳນຽມ ແລະ ຄ່າບໍລິການ**

ຂະແໜງການການເງິນ ເປັນເຈົ້າການໃນການເກັບຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການອະນຸຍາດພັດທະນາເຂດປອດພາສີ, ລົງທຶນກິດຈະການໃນເຂດປອດພາສີ ແລະ ດຳເນີນກິດຈະການຮ້ານຄ້າປອດພາສີ

ໂດຍເກັບເປັນເງິນກີບ ແລະ ມອບເຂົ້າງົບປະມານແຫ່ງລັດ ຢ່າງລວມສູນ ໂດຍຜ່ານລະບົບທະນາຄານ ທີ່ມີບັນຊີ ຂອງຄັງເງິນແຫ່ງຊາດ ຫຼື ລະບົບຄັງເງິນແຫ່ງຊາດ.

## ພາກທີ VIII
## ຂໍ້ຫ້າມ

### ມາດຕາ 79 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ບຸກລຸກ ຫຼື ປຸກສ້າງ ຢູ່ພື້ນທີ່ໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ໂດຍບໍ່ໄດ້ຮັບອະນຸຍາດ;
2. ທັບມ້າງ, ທຳລາຍ ສິ່ງປຸກສ້າງ ຫຼື ຊັບສິນ ໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ໂດຍບໍ່ໄດ້ຮັບອະນຸຍາດ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 80 ຂໍ້ຫ້າມສຳລັບຜູ້ພັດທະນາເຂດປອດພາສີ

ຫ້າມຜູ້ພັດທະນາເຂດປອດພາສີ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການເຂດປອດພາສີ ໂດຍບໍ່ຖືກຕ້ອງ ຕາມສັນຍາສຳປະທານ, ກົດໝາຍ ແລະ ລະບຽບການ;
2. ສຳຫຼວດ, ອອກແບບ ແລະ ກໍ່ສ້າງສິ່ງປຸກສ້າງ ໂດຍບໍ່ສອດຄ່ອງກັບແຜນຜັງເຕັກນິກ ທີ່ໄດ້ຮັບຮອງ;
3. ເອົາໃບອະນຸຍາດພັດທະນາເຂດປອດພາສີ ໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ;
4. ປິດເຂດປອດພາສີ ຫຼື ນຳໃຊ້ເຂດປອດພາສີເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 81 ຂໍ້ຫ້າມສຳລັບຜູ້ລົງທຶນກິດຈະການໃນເຂດປອດພາສີ

ຫ້າມຜູ້ລົງທຶນກິດຈະການໃນເຂດປອດພາສີ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການ ໂດຍບໍ່ຖືກຕ້ອງ ຕາມສັນຍາດຳເນີນທຸລະກິດກັບຜູ້ພັດທະນາ ແລະ ໃບອະນຸຍາດດຳເນີນທຸລະກິດ;
2. ໃຫ້ເຊົ່າ ຫຼື ໂອນກິດຈະການ ໃຫ້ຜູ້ບໍ່ມີໃບອະນຸຍາດດຳເນີນທຸລະກິດ ແລະ ບໍ່ໄດ້ຮັບການເຫັນດີຈາກຜູ້ພັດທະນາ ແລະ ກະຊວງການເງິນ;
3. ປິດກິດຈະການໃນເຂດປອດພາສີ ຫຼື ດຳເນີນກິດຈະການເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໄດ້ຮັບການເຫັນດີຈາກຜູ້ພັດທະນາ ແລະ ກະຊວງການເງິນ;
4. ເຄື່ອນຍ້າຍສິນຄ້າເຂົ້າ-ອອກເຂດປອດພາສີ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ພາສີ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 82 ຂໍ້ຫ້າມສຳລັບຜູ້ດຳເນີນກິດຈະການຮ້ານຄ້າປອດພາສີ

ຫ້າມຜູ້ດຳເນີນກິດຈະການຮ້ານຄ້າປອດພາສີ ມີ ພຶດຕິກຳ ດັ່ງນີ້:

1. ນຳເອົາສິນຄ້າ, ເຄື່ອງຂອງ ທີ່ບໍ່ມີນອນໃນບັນຊີ ມາວາງຂາຍ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະການພາສີ ຢ່າງເດັດຂາດ;

2. ທຳລາຍຂໍ້ມູນ ຫຼັກຖານ, ປິດບັງ, ເຊື່ອງອຳລາຍຮັບ ຫຼື ເອົາລາຍຮັບ ໄປລົງໃນບັນຊີລາຍຈ່າຍ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

3. ຂາຍສິນຄ້າທີ່ບໍ່ຕິດສະຫຼາກສິນຄ້າ ຫຼື ຕິດສະຫຼາກບໍ່ຖືກຕ້ອງ ແລະ ບໍ່ຕິດສະແຕມປອດພາສີ (Duty Not Paid) ຢ່າງຖືກຕ້ອງ;

4. ເອົາໃບອະນຸຍາດສ້າງຕັ້ງຮ້ານຄ້າປອດພາສີ ໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ;

5. ປອມແປງໃບເກັບເງິນ ຫຼື ເອກະສານອື່ນ ທີ່ພົວພັນກັບການຊື້ ຂາຍ ແລະ ລາຍຮັບ-ລາຍຈ່າຍ;

6. ເຄື່ອນຍ້າຍສິນຄ້າປອດພາສີ ໂດຍບໍ່ໄດ້ຮັບອະນຸຍາດ ຈາກລັດຖະການພາສີ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 83 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານຂອງລັດ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານຂອງລັດທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານວິຊາການ ໃຫ້ກິດຈະການໃນເຂດປອດພາສີ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງ ຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ IX
## ການຄຸ້ມຄອງ ແລະ ກວດກາ
## ວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ

**ມາດຕາ 84 ອົງການຄຸ້ມຄອງ ແລະ ກວດກາວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ**

ກະຊວງການເງິນ ເປັນຜູ້ຄຸ້ມຄອງ ແລະ ກວດກາວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ ໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ມາດຕາ 85 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງ ແລະ ກວດກາວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບເຂດປອດພາສີ ແລະ ຮ້ານຄ້າປອດພາສີ ເພື່ອສະເໜີຂັ້ນເທິງ ພິຈາລະນາ ແລ້ວຫັນເປັນແຜນການ, ແຜນງານ ແລະ ໂຄງການຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ ໃຫ້ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຮູ້ ແລະ ຈັດຕັ້ງປະຕິບັດ;

3. ຄົ້ນຄວ້າ ແລະ ສະເໜີ ລັດຖະບານ ພິຈາລະນາ ສ້າງຕັ້ງເຂດປອດພາສີ, ໂຈະ ຫຼື ຖອນ ໃບອະນຸຍາດ ພັດທະນາເຂດປອດພາສີ;

4. ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດລົງທຶນກິດຈະການໃນເຂດປອດພາສີ;

5. ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນກິດຈະການຮ້ານຄ້າປອດພາສີ ແລະ ອະນຸມັດແຜນນຳເຂົ້າສິນຄ້າປະຈຳປີ;

6. ຄົ້ນຄວ້າ ປັບປຸງ ອັດຕາ ແລະ ລາຍການຈັດເກັບ ຄ່າທຳນຽມ ຫຼື ຄ່າບໍລິການ ໃຫ້ສອດຄ່ອງກັບສະພາບການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມ ເພື່ອສະເໜີລັດຖະບານ ນຳສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;

7. ພິຈາລະນາສ້າງຕັ້ງ ຫຼື ຍຸບເລີກໜ່ວຍງານພາສີ ປະຈຳແຕ່ລະເຂດປອດພາສີ ແລະ ແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນ ປະຈຳໜ່ວຍງານພາສີ;

8. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການພັດທະນາເຂດປອດພາສີ ແລະ ຮ້ານຄ້າປອດພາສີ, ການສ້າງຄວາມເຂັ້ມແຂງ ໃຫ້ແກ່ການຈັດເກັບຄ່າພາສີ ແລະ ພັນທະອື່ນ ໃນເຂດປອດພາສີ ຫຼື ຮ້ານຄ້າປອດພາສີ ໃຫ້ທັນສະໄໝ, ວ່ອງໄວ, ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;

9. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 86 ສິດ ແລະ ໜ້າທີ່ຂອງກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ

ໃນການຄຸ້ມຄອງ ແລະ ກວດກາວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບກະຊວງການເງິນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

### ມາດຕາ 87 ເນື້ອໃນກວດກາ

ການກວດກາວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ;

2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ແລະ ພະນັກງານ ທີ່ຮັບຜິດຊອບວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ;

3. ເນື້ອໃນອື່ນ ທີ່ມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 88 ຮູບການ ການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 89 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການພັດທະນາ, ການລົງທຶນ ແລະ ການບໍລິຫານວຽກງານເຂດປອດພາສີ ແລະ ຮ້ານຄ້າປອດພາສີ ທີ່ມີປະສິດທິຜົນ, ດຶງດູດ ແລະ ຊຸກຍູ້ການພັດທະນາເຂດປອດພາສີ ແລະ ຮ້ານຄ້າປອດພາສີ ທີ່ເປັນການສ້າງຖານລາຍຮັບໃໝ່ທີ່ໝັ້ນຄົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຈະໄດ້ຮັບການອຳນວຍຄວາມສະດວກທາງດ້ານພາສີ ແລະ ການຄ້າ, ການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 90 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 91 ການຈັດຕັ້ງປະຕິບັດ**

ກະຊວງການເງິນ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 92 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 28 ກໍລະກົດ 2023 ເປັນຕົ້ນໄປ.

ຜູ້ພັດທະນາເຂດປອດພາສີ, ຜູ້ລົງທຶນກິດຈະການໃນເຂດປອດພາສີ ແລະ ຜູ້ດຳເນີນກິດຈະການຮ້ານຄ້າປອດພາສີ ທີ່ໄດ້ຮັບນະໂຍບາຍ ຫຼື ສິດຜົນປະໂຫຍດ ຕາມສັນຍາທີ່ໄດ້ເຊັນກັບລັດຖະບານ ກ່ອນດຳລັດສະບັບນີ້ ມີຜົນສັກສິດ ໃຫ້ສືບຕໍ່ປະຕິບັດຕາມສັນຍາ ຈົນກວ່າຈະສິ້ນສຸດສັນຍາ.

ຜູ້ພັດທະນາເຂດປອດພາສີ, ຜູ້ລົງທຶນກິດຈະການໃນເຂດປອດພາສີ ແລະ ຜູ້ດຳເນີນກິດຈະການຮ້ານຄ້າປອດພາສີ ທີ່ມີຈຸດປະສົງຕ້ອງການຮັບນະໂຍບາຍ ຫຼື ສິດຜົນປະໂຫຍດ ຕາມດຳລັດສະບັບນີ້ ມີສິດສະເໜີຕໍ່ກະຊວງການເງິນ ພາຍໃນກຳນົດເວລາ ໜຶ່ງຮ້ອຍຊາວວັນ ນັບແຕ່ວັນທີ່ດຳລັດສະບັບນີ້ ມີຜົນສັກສິດ ກະຊວງການເງິນ ຕ້ອງແຈ້ງໃຫ້ຜູ້ສະເໜີ ກ່ຽວກັບການໄດ້ຮັບນະໂຍບາຍ ຫຼື ສິດຜົນປະໂຫຍດ ຕາມດຳລັດສະບັບນີ້.

ຜູ້ລົງທຶນກິດຈະການປອດພາສີ ໃນເຂດເສດຖະກິດພິເສດ, ເຂດເສດຖະກິດອື່ນ, ເຂດໂລຊິດສະຕິກ ຫຼື ຕົວເມືອງອັດສະລິຍະ ໃຫ້ນຳໃຊ້ບົດບັນຍັດ ກ່ຽວກັບລະບຽບການທາງພາສີ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**